# ທະນາຄານ ອາ ເຮັສ ບີ ລາວ ຈຳກັດ.

pwc

## ເອກະສານລາຍງານການເງິນ

(ສອດຄ່ອງກັບຫຼັກການບັນຊີທະນາຄານ ແລະ ບັນດາລະບຽບການ ແລະ ແຈ້ງການຕ່າງໆທີ່ອອກໂດຍຂອງທະນາຄານແຫ່ງ ສປປ ລາວ)

**31 ທັນວາ 2015**

www.pwc.com/la

# ທະນາຄານ ອາ ເຣັສ ບີ ລາວ ຈຳກັດ

## ບົດລາຍງານສະພາຜູ້ບໍລິຫານ

## ໃນວັນທີ 31 ທັນວາ 2015

### ຄວາມຮັບຜິດຊອບຂອງຄະນະຜູ້ບໍລິຫານ ຕໍ່ເອກະສານລາຍງານການເງິນ

ສະພາບໍລິຫານ ຂອງທະນາຄານ ອາ ເຣັສ ບີ ລາວ ຈຳກັດ ແມ່ນມີຄວາມຮັບຜິດຊອບຕໍ່ການກະກຽມເອກະສານລາຍງານການເງິນໃນວັນທີ 31 ທັນວາ 2015 ເພື່ອຮັບປະກັນວ່າ ບົດລາຍງານຖານະການເງິນ, ຜົນການດຳເນີນງານ, ໃບລາຍງານການປ່ຽນແປງຂອງທຶນ ແລະ ໃບລາຍງານກະແສເງິນສົດລວມທ້າຍປີ ແມ່ນໄດ້ຖືກກະກຽມ ໂດຍສອດຄ່ອງກັບນະໂຍບາຍການບັນຊີ ແລະ ລະບຽບການບັນຊີທະນາຄານ ພ້ອມກັບແຈ້ງການອື່ນໆ ທີ່ກ່ຽວຂ້ອງເຊິ່ງອອກໂດຍທະນາຄານ ແຫ່ງ ສປປ ລາວ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍທີ 2 ໃນເອກະສານລາຍງານການເງິນ, ການກະກຽມເອກະສານລາຍງານການເງິນນີ້ແມ່ນຮຽກຮ້ອງໃຫ້ສະພາບໍລິຫານຂອງທະນາຄານຕ້ອງໄດ້ປະຕິບັດ ດັ່ງນີ້:

i) ນຳໃຊ້ຫຼັກການບັນຊີທີ່ເໝາະສົມ, ສົມເຫດສົມຜົນ, ມີຄວາມຮອບຄອບ, ມີການຄາດຄະເນ ແລະ ນຳໃຊ້ຢ່າງຕໍ່ເນື່ອງ.

ii) ປະຕິບັດໃຫ້ສອດຄ່ອງກັບຕາມຫຼັກການບັນຊີທະນາຄານ ແລະ ວິທີການບັນຊີ ພ້ອມທັງແຈ້ງການອື່ນໆ ທີ່ກ່ຽວຂ້ອງເຊິ່ງອອກໂດຍທະນາຄານ ແຫ່ງ ສປປ ລາວ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍທີ 2 ໃນເອກະສານລາຍງານການເງິນແລະໃຫ້ແນ່ໃຈວ່າ ສິ່ງເຫຼົ່ານີ້ໄດ້ຮັບການເປີດເຜີຍຢ່າງເໝາະສົມ, ມີຄຳອະທິບາຍ ແລະ ສະແດງອອກໃນເອກະສານລາຍງານການເງິນ;

iii) ການເກັບຮັກສາຫຼັກຖານທີ່ໃຊ້ໃນການບັນທຶກບັນຊີຢ່າງຄົບຖ້ວນ ແລະ ມີລະບົບການຄວບຄຸມພາຍໃນທີ່ມີປະສິດທິພາບ;

iv) ການສ້າງເອກະສານລາຍງານການເງິນ ບົນພື້ນຖານຫຼັກການຄວາມສືບເນື່ອງ, ຈົນກວ່າຈະເຫັນວ່າບໍ່ເໝາະສົມ ຖ້າຫາກທະນາຄານຈະດຳເນີນການຕໍ່ໄປໃນອານາຄົດອັນໃກ້; ແລະ

v) ຄຸ້ມຄອງ ແລະ ຊີ້ແນວທາງໃຫ້ທະນາຄານຢ່າງມີປະສິດທິພາບ ແລະ ມີສ່ວນຮ່ວມຕໍ່ການຕັດສິນໃຈທັງໝົດ ທີ່ສົ່ງຜົນກະທົບ ຕໍ່ການດຳເນີນງານ ແລະ ປະສິດທິພາບຂອງທະນາຄານ ແລະ ການຕັດສິນໃຈດັ່ງກ່າວໄດ້ຮັບຜົນຢ່າງຖືກຕ້ອງໃນ ເອກະສານລາຍງານການເງິນ.

ຄະນະຜູ້ບໍລິຫານຂອງທະນາຄານໄດ້ຢັ້ງຢືນວ່າ ທະນາຄານໄດ້ປະຕິບັດຢ່າງສອດຄ່ອງຕາມຂໍ້ກຳນົດຂ້າງເທິງນີ້ເຂົ້າ ໃນການສ້າງເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2015.

### ບົດລາຍງານຂອງຄະນະຜູ້ບໍລິຫານຕໍ່ເອກສານລາຍງານການເງິນ

ພວກເຮົາຂໍຮັບຮອງວ່າ ການກະກຽມລາຍງານການເງິນໃນວັນທີ 31 ທັນວາ 2015 ແມ່ນມີຄວາມສຳຄັນຕໍ່ຖານະການເງິນຂອງທະນາຄານ ,ຜົນການດຳເນີນງານ, ໃບລາຍງານການປ່ຽນແປງຂອງທຶນ ແລະ ໃບລາຍງານກະແສເງິນສົດລວມ ແລະໄດ້ຖືກປະຕິບັດຢ່າງຖືກຕ້ອງສອດຄ່ອງກັບກົດໝາຍບັນຊີຂອງ ສປປ ລາວ ແລະ ລະບຽບການບັນຊີອື່ນໆ ທີ່ກ່ຽວຂ້ອງເຊິ່ງອອກໂດຍທະນາຄານ ແຫ່ງ ສປປ ລາວ ດັ່ງທີ່ໄດ້ອະທິບາຍໄວ້ໃນ ໝາຍເຫດປະກອບທີ່ 2 ເອກະສານລາຍງານການເງິນ.

ໃນນາມຂອງຄະນະສະພາບໍລິຫານ

ທະນາຄານ ອາເຣັສບີ ລາວ ຈຳກັດ RHB Bank Lao Limited

ແດນນີ ລີງ ຈີ ຮຽນ

ຜູ້ອຳນວຍໃຫຍ່ ປະຈຳປະເທດລາວ

ວັນທີ 30 ມີນາ 2016

pwc

**ບົດລາຍງານຂອງຜູ້ກວດສອບອິດສະຫຼະ**

**ເຖິງ: ສະພາບໍລິຫານ ທະນາຄານ ອາ ເຮັສ ບີ ລາວ ຈຳກັດ**

ພວກເຮົາໄດ້ດຳເນີນການກວດສອບເອກະສານລາຍງານການເງິນ ຂອງທະນາຄານ ອາ ເຮັສ ບີ ລາວ ຈຳກັດ ຊຶ່ງປະກອບມີ ໃບຍອດເຫຼືອ ໃນວັນທີ 31 ທັນວາ 2015 ແລະ ໃບລາຍງານຜົນໄດ້ຮັບ, ການປ່ຽນແປງໃນສ່ວນຂອງໃບລາຍງານກະແສເງິນສົດ ສຳລັບທ້າຍປີສິ້ນສຸດ ວັນທີ 31 ທັນວາ 2015 ສຳລັບປີການບັນຊີດັ່ງກ່າວ ເຊິ່ງໄດ້ ສັງລວມຫຼັກການບັນຊີທີ່ເປັນເນື້ອໃນສຳຄັນ ແລະ ອະທິບາຍຂໍ້ມູນອື່ນໆ. ບົດລາຍງານການເງິນ ໄດ້ຖືກສ້າງຂຶ້ນໂດຍຜູ້ບໍລິຫານຂອງທະນາຄານ ຊຶ່ງສອດຄ່ອງກັບນະໂຍບາຍການບັນຊີ ແລະ ລະບຽບການບັນຊີ ແລະແຈ້ງການອື່ນໆທີ່ກ່ຽວຂ້ອງເຊິ່ງອອກໂດຍທະນາຄານ ແຫ່ງ ສປປ ລາວ ດັ່ງທີ່ໄດ້ອະທິບາຍໄວ້ໃນ ໝາຍເຫດປະກອບທີ່ 2 ເອກະສານ ລາຍງານການເງິນ.

***ຄວາມຮັບຜິດຊອບຂອງຜູ້ບໍລິຫານຕໍ່ກັບເອກະສານລາຍງານການເງິນ***

ຜູ້ບໍລິຫານມີຄວາມຮັບຜິດຊອບຕໍ່ການກະກຽມສ້າງເອກະສານລາຍງານການເງິນສະບັບນີ້ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີຂອງ ທະນາຄານ ແລະ ລະບຽບການບັນຊີ ແລະແຈ້ງການອື່ນໆທີ່ກ່ຽວຂ້ອງເຊິ່ງອອກໂດຍທະນາຄານ ແຫ່ງ ສປປ ລາວ ດັ່ງທີ່ໄດ້ອະທິບາຍໄວ້ ໃນ ໝາຍເຫດປະກອບທີ່ 2 ເອກະສານລາຍງານການເງິນ ແລະ ການຄວບຄຸມພາຍໃນ ເຊັ່ນ ການຕັດສິນໃຈຂອງຜູ້ບໍລິຫານເປັນສິ່ງຈຳ ເປັນໃນການສ້າງເອກະສານລາຍງານການເງິນ ທີ່ປາສະຈາກຂໍ້ຜິດພາດ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

***ຄວາມຮັບຜິດຊອບ ຂອງຜູ້ກວດສອບບັນຊີ***

ຄວາມຮັບຜິດຊອບຂອງພວກເຮົາແມ່ນສະແດງຄວາມຄິດເຫັນຕໍ່ເອກະສານລາຍງານການເງິນ ບົນພື້ນຖານການກວດສອບຂອງພວກເຮົາ. ພວກເຮົາດຳເນີນການກວດສອບຕາມມາດຕະຖານສາກົນດ້ານການກວດສອບ. ມາດຕະຖານເຫຼົ່ານີ້ໄດ້ ກຳນົດໃຫ້ພວກເຮົາຕ້ອງປະຕິບັດ ຕາມກົດ ຈັນຍາບັນ ແລະ ວາງແຜນການ ແລະ ດຳເນີນການກວດສອບ ເພື່ອການຮັບປະກັນທີ່ສົມເຫດສົມຜົນ ກ່ຽວກັບ ເອກະສານລາຍ ງານການເງິນ ວ່າໄດ້ປາສະຈາກການລາຍງານຜິດພາດ.

ການກວດສອບໄດ້ປະຕິບັດຕາມຂັ້ນຕອນເພື່ອໃຫ້ໄດ້ຫຼັກຖານການການກວດສອບບັນຊີ ກ່ຽວກັບ ຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນ ຢູ່ໃນເອກະສານລາຍງານການເງິນ. ການເລືອກເຟັ້ນວິທີການກວດສອບດັ່ງກ່າວແມ່ນຂຶ້ນກັບການຕັດສິນໃຈຂອງຜູ້ກວດສອບບັນຊີ ລວມ ທັງການປະເມີນຄວາມສ່ຽງຂອງຄວາມຜິດພາດທີ່ຖືວ່າມີເນື້ອໃນສຳຄັນ ຂອງບົດລາຍງານການເງິນ ອັນເນື່ອງມາຈາກການສໍ້ໂກງ ຫຼືຄວາມ ຜິດພາດ.ການປະເມີນຄວາມສ່ຽງເຫຼົ່ານັ້ນ ຜູ້ກວດສອບບັນຊີຕ້ອງປະເມີນປະສິດທິພາບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການສ້າງ ເອກະສານລາຍງານການເງິນ ເພື່ອກຳນົດວິທີການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງສະແດງຄຳເຫັນຕໍ່ ປະສິດທິພາບຂອງລະບົບການຄວບຄຸມພາຍໃນ. ໃນການກວດສອບ ຍັງໄດ້ການປະເມີນຄວາມເໝາະສົມຂອງຫຼັກການບັນຊີທີ່ໄດ້ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງຕົວເລກຄາດຄະເນປະຕິບັດ ທີ່ສ້າງຂຶ້ນໂດຍຜູ້ບໍລິຫານ ລວມທັງການປະເມີນການນຳສະເໜີເອກະສານ ລາຍງານການເງິນ.

ພວກເຮົາເຊື່ອໝັ້ນວ່າຫຼັກຖານການກວດສອບ ທີ່ພວກເຮົາໄດ້ຮັບມີຢ່າງພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃນການໃຫ້ຄຳເຫັນໃນ ການກວດສອບຄັ້ງນີ້.

*ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າຄູບເປີສ໌ (ລາວ) ຈຳກັດ. ຊັ້ນ 4 ອາຄານເອເຊັນແຊດພານົດ, ອາຄານເລກທີ 33 ຖະໜົນລ້ານຊ້າງ ຕູ້ ປ.ນ 7003, ວຽງຈັນ ສປປ ລາວ. ໂທ: 856 21 222718/9. www.pwc.com/la*

pwc

***ຄຳເຫັນ***

ໃນຄຳເຫັນຂອງພວກເຮົາ ເຫັນວ່າເອກະສານລາຍງານການເງິນ ຂອງທະນາຄານ ສຳລັບທ້າຍປີສິ້ນສຸດວັນທີ 31 ທັນວາ 2015 ໄດ້ຖືກສ້າງຂຶ້ນ ແລະ ນຳສະເໜີຢ່າງຖືກຕ້ອງທີ່ສຸດກັບຕົວຈິງ ຊຶ່ງສອດຄ່ອງກັບຫຼັກການບັນຊີ ຂອງທະນາຄານ ແລະ ລະບຽບການບັນຊີ ແລະ ແຈ້ງການອື່ນໆທີ່ກ່ຽວຂ້ອງເຊິ່ງອອກໂດຍທະນາຄານ ແຫ່ງ ສປປ ລາວ ດັ່ງທີ່ໄດ້ອະທິບາຍໄວ້ໃນ ໝາຍເຫດປະກອບທີ່ 2 ເອກະສານລາຍງານການເງິນ.

**ພື້ນຖານການບັນຊີ ແລະ ຂໍ້ຈຳກັດການນຳໃຊ້**

ດັ່ງທີ່ພວກເຮົາບໍ່ໄດ້ມີເງື່ອນໄຂໃນການອອກຄຳເຫັນ, ພວກເຮົາສະຫລຸບວ່າ ບົດອະທິບາຍປະກອບທີ່ 2 ໃນເອກະສານລາຍງານການເງິນສະບັບນີ້ ເຊິ່ງໄດ້ອະທິບາຍເຖິງພື້ນຖານການບັນຊີ. ເອກະສານລາຍງານການເງິນໄດ້ຖືກກະກຽມເພື່ອສະໜອງຂໍ້ມູນໃຫ້ທະນາຄານ ແລະ ເພື່ອຊ່ວຍໃຫ້ທະນາຄານບັນລຸຕາມຂໍ້ກຳນົດການລາຍງານທາງການເງິນພາຍໃຕ້ ທະນາຄານແຫ່ງ ສປປ ລາວ ດັ່ງນັ້ນ, ເອກະສານລາຍງານການເງິນນີ້ ອາດຈະບໍ່ເໝາະສົມສຳລັບຈຸດປະສົງອື່ນ.

ບໍລິສັດພຣາຍສ໌ວໍເຕີເຮົ້າສ໌ກູບເປີ້ ລາວ ຈຳກັດ

ສະກຸນາ ແຍ້ມສະກຸນ
ຮຸ້ນສ່ວນບໍລິສັດ

ນະຄອນຫຼວງວຽງຈັນ, ສ.ປ.ປ ລາວ

ວັນທີ 30 ມີນາ 2016

# ທະນາຄານ ອາ ເຮັສ ບີ ລາວ ຈາກັດ
## ໃບສະຫຼຸບຊັບສິນບັດ
## ໃນວັນທີ 31 ທັນວາ 2015

| | ບົດ ອະທິບາຍ | 2015 ກີບ | 2014 ກີບ |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ ແລະ ຍອດເຫຼືອກັບທະນາຄານກາງ | 4 | 142.640.300.590 | 209.068.476.742 |
| ເງິນຝາກກັບທະນາຄານອື່ນ | 5 | 23.743.546.574 | 27.987.550.000 |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | 7 | 194.340.581.523 | 81.233.241.150 |
| ເງິນແຮຕາມລະບຽບການ ສໍາລັບເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | 8 | (995.420.074) | (406.165.470) |
| ຊັບສິນຄົງທີ່ມີຕົວຕົນ | 9 | 13.693.098.735 | 16.274.806.141 |
| ຊັບສິນບໍ່ມີຕົວຕົນ | 10 | 4.815.364.461 | 5.771.855.229 |
| ຊັບສິນອື່ນໆ | 11 | 3.761.829.351 | 4.139.742.717 |
| **ລວມຍອດຊັບສິນ** | | **381.999.301.160** | **344.069.506.509** |
| **ໜີ້ສິນ ແລະ ທຶນ** | | | |
| **ໜີ້ສິນ** | | | |
| ເງິນຝາກຈາກລູກຄ້າ | 12 | 36.381.901.236 | 8.114.729.540 |
| ຈໍານວນເງິນຈາກບໍລິສັດແມ່ | 13 | 46.471.620.816 | 37.841.811.854 |
| ໜີ້ສິນອື່ນໆ | 14 | 1.321.416.956 | 3.885.608.589 |
| **ລວມຍອດໜີ້ສິນ** | | **84.174.939.008** | **49.842.149.983** |
| **ທຶນ** | | | |
| ທຶນຈົດທະບຽນ | 15 | 301.500.000.000 | 301,500,000,000 |
| ຂາດດຸນ | | (3.675.637.848) | (7.272.643.474) |
| **ລວມຍອດທຶນ** | | **297.824.362.152** | **294.227.356.526** |
| **ລວມຍອດໜີ້ສິນ ແລະ ທຶນ** | | **381.999.301.160** | **344.069.506.509** |

ທະນາຄານ ອາເຮັສບີ ລາວ ຈໍາກັດ RHB Bank Lao Limited

ແດນນີ ລີງ ຈີ ຮຽນ
ຜູ້ອໍານວຍໃຫຍ່ ປະຈໍາປະເທດລາວ

ວັນທີ 30 ມີນາ 2016

ບົດອະທິບາຍຊ້ອນທ້າຍ ໜ້າ 8 ເຖິງ 30 ແມ່ນເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ ລາຍງານຂອງຜູ້ກວດສອບອິດສະຫຼະຕໍ່ບົດລາຍງານຖານະການເງິນໜ້າ 2

# ທະນາຄານ ອາ ເຮັສ ບີ ລາວ ຈຳກັດ
## ໃບລາຍງານຜົນໄດ້ຮັບ
## ສຳລັບທ້າຍປີ ສິ້ນສຸດ ວັນທີ 31 ທັນວາ 2015

| | ບົດ ອະທິບາຍ | 2015 ກີບ | 2014 ກີບ |
|---|---|---|---|
| ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ | | 13.688.525.300 | 1.783.637.327 |
| ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ | | (383.034.173) | (76.393.884) |
| **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນສຸດທິ** | 16 | **13.305.491.127** | **1.707.243.443** |
| ຄ່າເຊື່ອມມູນຄ່າຂອງເງິນໃຫ້ກູ້ຢືມ | 8 | (591.828.444) | (406.165.470) |
| **ລາຍຮັບດອກເບ້ຍສຸດທິຫຼັງຈາກຫັກຄ່າເຊື່ອມມູນຄ່າ** | | **12.713.662.683** | **1.301.077.973** |
| ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ | | 1.606.604.306 | 937.075.243 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າ | | (145.132.981) | (38.764.165) |
| **ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າສຸດທິ** | 17 | **1.461.471.325** | **898.311.078** |
| ກຳໄລ-ຂາດທຶນຈາກການຊື້ຂາຍເງິນຕາຕ່າງປະເທດ, ສຸດທິ | | 1.952.732.222 | (242.240.988) |
| ເງິນເດືອນ ແລະ ລາຍຈ່າຍອື່ນໆສຳລັບພະນັກງານ | 18 | (5.126.635.873) | (4.232.806.911) |
| ລາຍຈ່າຍບໍລິຫານ | 19 | (3.745.431.065) | (3.225.500.238) |
| ຄ່າຫຼູ້ຍຫ້ຽນ | 9,10 | (3.658.793.667) | (1.771.484.388) |
| **ລວມລາຍຈ່າຍ** | | **(10.578.128.383)** | **(9.472.032.525)** |
| **ກຳໄລ-ຂາດທຶນກ່ອນອາກອນ** | | **3.597.005.626** | **(7.272.643.474)** |
| ລາຍຮັບອາກອນລາຍຈ່າຍ | 20 | - | - |
| **ກຳໄລ-ຂາດທຶນສຸດທິພາຍໃນປີ** | | **3.597.005.626** | **(7.272.643.474)** |

ແດນນີ ລີງ ຈີ ຮຽນ
ຜູ້ອຳນວຍໃຫຍ່ ປະຈຳປະເທດລາວ

ວັນທີ 30 ມີນາ 2016

ບົດອະທິບາຍຊ້ອນທ້າຍ ໜ້າ 8 ເຖິງ 30 ແມ່ນເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ ລາຍງານຂອງຜູ້ກວດສອບອິດສະຫຼະຕໍ່ ບົດລາຍງານຖານະການເງິນໜ້າ 2

# ທະນາຄານ ອາ ເຮັສ ບີ ລາວ ຈຳກັດ
## ໃບລາຍງານການປ່ຽນແປງຂອງທຶນ
## ສຳລັບທ້າຍປີ ສິ້ນສຸດ ວັນທີ 31 ທັນວາ 2015

| | ທຶນຈົດທະບຽນ | ຂາດທຶນສະສົມ | ລວມ |
|---|---|---|---|
| | ກີບ | ກີບ | ກີບ |
| **ຍອດເຫຼືອໃນວັນທີ 31 ພຶດສະພາ 2015 (ມື້ສ້າງຕັ້ງທະນາຄານ)** | - | - | - |
| ທຶນຈົດທະບຽນ | 301.500.000.000 | - | **301.500.000.000** |
| ຂາດທຶນສຸດທິພາຍໃນປີ | - | (7.272.643.474) | **(7.272.643.474)** |
| **ໃນວັນທີ 31 ທັນວາ 2014** | **301.500.000.000** | **(7.272.643.474)** | **294.227.356.526** |
| ກຳໄລສຳລັບປີ, ສຸດທິ | - | 3.597.005.626 | **3.597.005.626** |
| **ໃນວັນທີ 31 ທັນວາ 2015** | **301.500.000.000** | **(3.675.637.848)** | **297.824.362.152** |




ແດນນີ ລິງ ຈີ ຮຽນ
ຜູ້ອຳນວຍໃຫຍ່ ປະຈຳປະເທດລາວ

ວັນທີ 30 ມີນາ 2016

ບົດອະທິບາຍຊ້ອນທ້າຍ ໜ້າ 8 ເຖິງ 30 ແມ່ນເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ ລາຍງານຂອງຜູ້ກວດສອບອິດສະຫຼະຕໍ່ບົດລາຍງານຖານະການເງິນໜ້າ 2

# ທະນາຄານ ອາ ເຮັສ ບີ ລາວ ຈຳກັດ
## ໃບລາຍງານກະແສເງິນສົດ
## ສຳລັບທ້າຍປີ ສິ້ນສຸດ ວັນທີ 31 ທັນວາ 2015

| | ບົດ ອະທິບາຍ | 2015 ກີບ | 2014 ກີບ |
|---|---|---|---|
| **ກິດຈະກຳການດຳເນີນງານ** | | | |
| ກຳໄລ-ຂາດທຶນກ່ອນອາກອນ | | 3.597.005.626 | (7.272.643.474) |
| *ການດັດແກ້ສຳລັບ:* | | | |
| ຫັກຄ່າເຊື່ອມເງິນໃຫ້ກູ້ຢືມ | 8 | 591.828.444 | 406.165.470 |
| ຫັກຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມ | 9,10 | 3.658.793.667 | 1.771.484.388 |
| ກຳໄລ-ຂາດທຶນຈາກການຊື້ຂາຍ ເງິນຕາຕ່າງປະເທດ ສຸດທິ | | (1.952.732.222) | 242.240.988 |
| ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ | 16 | (13.688.525.300) | (1.783.637.327) |
| ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ | 16 | 383.034.173 | 76.393.884 |
| **ກະແສເງິນສົດຈາກກຳໄລຈາກການດຳເນີນງານກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນ** | | **(7.410.595.613)** | **(6.559.996.070)** |
| (ການເພີ່ມຂຶ້ນ)-ຫຼຸດລົງ ຂອງເງິນຝາກຕາມລະບຽບການກັບ ທະນາຄານ ສ.ປ.ປ ລາວ | 4 | 132.396.411.879 | (193.872.653.458) |
| ການເພີ່ມຂຶ້ນຂອງເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | 7 | (113.107.340.373) | (81.233.241.150) |
| ການເພີ່ມຂຶ້ນຂອງຊັບສິນອື່ນໆ | | (207.196.909) | (3.883.155.580) |
| ຍອດເພີ່ມຂຶ້ນເງິນຝາກຈາກລູກຄ້າ | 12 | 28.267.171.696 | 8.114.729.540 |
| ຍອດເພີ່ມຂຶ້ນຈາກບໍລິສັດແມ່ | | 11.478.755.200 | 13.812.943.861 |
| ການເພີ່ມຂຶ້ນ-(ຫຼຸດລົງ) ຂອງໜີ້ສິນອື່ນໆ | | (2.608.961.417) | 3.850.743.689 |
| ດອກເບ້ຍຮັບ | | 13.110.104.105 | 1.563.782.708 |
| ດອກເບ້ຍຈ່າຍ | | (287.179.854) | (41.528.983) |
| **ເງິນສົດສຸດທິ ທີ່ໃຊ້ໃນກິດຈະກຳການດຳເນີນງານ** | | **69.041.764.327** | **(251.688.379.373)** |
| **ກິດຈະກຳການລົງທຶນ** | | | |
| ຊື້ຊັບສິນຄົງທີ່ມີຕົວຕົນ (i) | | - | (11.000.000) |
| ຊື້ຊັບຊັບສິນຄົງທີ່ບໍ່ມີຕົວຕົນ (i) | | (426.883.281) | - |
| **ເງິນສົດສຸດທິ ທີ່ໃຊ້ໃນກິດຈະກຳການລົງທຶນ** | | **(426.883.281)** | **(11.000.000)** |
| **ກິດຈະກຳທາງການເງິນ** | | | |
| ການເພີ່ມທຶນ | 15 | - | 301.500.000.000 |
| **ເງິນສົດສຸດທິ ທີ່ເກີດຈາກກິດຈະກຳທາງການເງິນ** | | **-** | **301.500.000.000** |
| ການເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ການທຽບເທົ່າເງິນສົດ | | 61.204.285.433 | 43.240.624.555 |
| ເງິນສົດ ແລະ ການທຽບເທົ່າເງິນສົດ, ຕົ້ນປີ | | 43.183.373.284 | - |
| ຜົນກະທົບຈາກສ່ວນຕ່າງອັດຕາແລກປ່ຽນເງິນຕາ | | 519.946.868 | (57.251.271) |
| **ເງິນສົດ ແລະ ລາຍການທຽບເທົ່າເງິນສົດ,ໃນຕອນທ້າຍ (ບົດອະທິບາຍຂໍ້ທີ 6)** | | **104.907.605.585** | **43.183.373.284** |

(i) ເງິນສົດ ຊື້ຊັບສິນຄົງທີ່ມີຕົວຕົນ ແລະ ຊັບສິນຄົງທີ່ບໍ່ມີຕົວຕົນ ພາຍໃນປີ 426.883.281 ກີບ (ປີ20114: 11.000.000). ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດທີ່ກ່ຽວກັບລາຍຈ່າຍຂອງການໄດ້ມາຂອງຊັບສິນຄົງທີ່ມີຕົວຕົນ ແຕ່ບໍ່ໄດ້ຊຳລະເງິນ ໃນ ວັນທີ 31 ທັນວາ 2015 ຈຳນວນ 659.813.513 ກີບ (ປີ 2014: 23.807.145.758ກີບ).

ແດນນີ ລຶງ ຈີ ຮຽນ
ຜູ້ອຳນວຍໃຫຍ່ ປະຈຳປະເທດລາວ
ວັນທີ 30 ມີນາ 2016

ບົດອະທິບາຍຊ້ອນທ້າຍ ໜ້າ 8 ເຖິງ 30 ແມ່ນເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ ລາຍງານຂອງຜູ້ກວດສອບອິດສະຫຼະຕໍ່ບົດລາຍງານ ຖານະການເງິນໜ້າ 2

## 1. ຂໍ້ມູນທົ່ວໄປ

ທະນາຄານ ອາ ເຮັສ ບີ ລາວ ຈຳກັດ (“ທະນາຄານ”) ແມ່ນທະນາຄານການຄ້າ ເຊິ່ງສ້າງຕັ້ງ ແລະ ຈົດທະບຽນໃນ ສ ປປ ລາວ.

ທະນາຄານທຸລະກິດລົງທຶນຕ່າງປະເທດ 100% ດຳເນີນກິດຈະການໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (“ສປປ ລາວ”) ພາຍໃຕ້ກົດໝາຍທະນາຄານທຸລະກິດ ເລກທີ 03/ NA ລົງວັນທີ 26 ທັນວາ 2006 ແລະ ກົດລະບຽບຂອງທະນາຄານແຫ່ງ ສ ປປ ລາວ. ເຊິ່ງໄດ້ຮັບໃບທະບຽນວິສາຫະກິດ ເລກທີ 10/ທຫລ ອອກໃຫ້ໂດຍທະນາຄານແຫ່ງ ສປປ ລາວ ("ທຫລ") ແລະ ໃບອະນຸຍາດດຳເນີນທຸລະກິດ ເລກທີ 213/ຈທວ ລົງວັນທີ 30 ພຶດສະພາ 2014.

ວຽກງານຕົ້ນຕໍຂອງທະນາຄານ ແມ່ນໃຫ້ບໍລິການທາງດ້ານການທະນາຄານ ແລະ ການບໍລິການການເງິນທີ່ກ່ຽວຂ້ອງໃນ ສປປ ລາວ.

RHB Bank Berhad ຖືຮຸ້ນເຕັມໃນ ທະນາຄານ ອາ ເຮັສ ບີ ລາວ ຈຳກັດ 100 % ໃນວັນທີ 30 ພຶດສະພາ 2014. ເຊິ່ງມີທຶນຈົດທະບຽນ 301,500,000,000 ກີບ ມີ 30,000,000 ຮຸ້ນ ເຊິ່ງມີມູນຄ່າຮຸ້ນລະ 10,050 ກີບ (ປີ 2014: 10.050 ກີບ). ທຶນຈົດທະບຽນທີ່ຖອກແລ້ວໃນວັນທີ 31 ທັນວາ 2015 ແມ່ນ 301.500.000.000 ກີບ (ປີ 2014: 301.500.000.000 ກີບ).

ສຳນັກງານຂອງທະນາຄານຕັ້ງຢູ່ ໜ່ວຍທີ່1, ບ້ານເລກທີ 008, ຖະໜົນໄກສອນ, ບ້ານ ໂພນສະອາດ,ນະຄອນນະຫຼວງວຽງຈັນ ສປປ ລາວ.

ທາງຄະນະກຳມະການປະຊຸມຂອງທາງທະນາຄານໄດ້ມີການທົບທວນເອກະສານການເງິນເຫຼົ່ານີ້ ແລະ ໄດ້ອະນຸມັດອອກວັນທີ 30 ມີນາ 2016.

## 2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ

ວິທີການບັນຊີທີ່ສຳຄັນໄດ້ຖືກຮັບຮອງເພື່ອກະກຽມເຂົ້າໃນເອກະສານລາຍງານການເງິນມີດັ່ງລຸ່ມນີ້:

### 2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ຂອງທະນາຄານຖືກກະກຽມໂດຍສອດຄ່ອງກັບລະບຽບ ແລະ ແຈ້ງການຂອງທະນາຄານແຫ່ງ ສ.ປ.ປ ລາວ ແລະ ວິທີການບັນຊີ. ການນຳໃຊ້ຫຼັກການພື້ນຖານການບັນຊີ ອາດຈະແຕກຕ່າງຈາກຫຼັກການບັນຊີ ທີ່ຮັບຮອງເອົາໂດຍທົ່ວໄປໃນບັນດາປະເທດອື່ນໆ ແລະ ທີ່ບໍ່ຢູ່ໃນອຳນາດຄຸ້ມຄອງ ຂອງ ສ.ປ.ປ ລາວ. ເອກະສານລາຍງານການເງິນສະບັບນີ້ ບໍ່ໄດ້ເຈດຕະນາສະແດງຖານະການເງິນ ແລະ ຜົນການດຳເນີນງານ ທີ່ບໍ່ຢູ່ໃນອຳນາດຄຸ້ມຄອງ ຂອງ ສ.ປ.ປ ລາວ. ດ້ວຍເຫດນີ້ເອກະສານລາຍງານການເງິນດັ່ງກ່າວນີ້ ຈະພຽງຊ່ວຍບອກໃຫ້ຮູ້ແຈ້ງ ກ່ຽວກັບວິທີການບັນຊີ, ຂັ້ນຕອນໃນການກະກຽມ ແລະ ການປະຕິບັດ ຂອງທະນາຄານ.

ການກະກຽມເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບວິທີການບັນຊີຂອງທະນາຄານທີ່ຮັບຮອງເອົານັ້ນ ຮຽກຮ້ອງ ໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ວາງຂໍ້ສົມມຸດຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ, ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຝ່າຍບໍລິຫານ ກ່ຽວກັບ ເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ຊຶ່ງຜົນຂອງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນ.

ເອກະສານລາຍງານການເງິນ ແມ່ນໄດ້ຖືກກະກຽມພາຍໃຕ້ຫຼັກການໃນການບັນທຶກໂດຍອີງຕາມມູນຄ່າຕົ້ນທຶນເບື້ອງຕົ້ນ.

### 2.2 ການປະເມີນ ແລະ ສະກຸນເງິນທີ່ນຳສະເໜີ

ທະນາຄານໄດ້ມີການບັນທຶກເປັນສະກຸນເງິນ ກີບ ແລະ ເອກະສານລາຍງານການເງິນໄດ້ຖືກນຳສະເໜີເປັນສະກຸນເງິນ ກີບ.

## 2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

### 2.3 ເຄື່ອງມືທາງການເງິນ

ຊັບສິນ ແລະ ໜີ້ສິນທາງການເງິນ ທີ່ສຳຄັນ ຂອງທະນາຄານ ລວມມີ ເງິນສົດ ແລະ ຍອດເຫຼືອຝາກກັບທະນາຄານກາງ; ເງິນຝາກຢູ່ກັບ ທະນາຄານອື່ນ, ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ, ເງິນຝາກ ຈາກລູກຄ້າ ແລະ ສະຖາບັນການເງິນອື່ນ ແລະ ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອື່ນໆ. ນະໂຍບາຍການບັນຊີ ທີ່ໄດ້ຮັບການຍອມຮັບ ແລະ ການຕີມູນຄ່າ ຂອງບັນດາລາຍການເຫຼົ່ານີ້ ດັ່ງທີ່ໄດ້ຖືກເປີດເຜີຍໃນນະໂຍບາຍບັນຊີທີ່ກ່ຽວຂ້ອງ.

### 2.4 ການຮັບຮູ້ລາຍຮັບດອກເບ້ຍ ແລະ ລາຍຈ່າຍດອກເບ້ຍ

**ການຮັບຮູ້ລາຍຮັບດອກເບ້ຍ**

ລາຍຮັບຈາກດອກເບ້ຍ ແມ່ນຖືກຮັບຮູ້ບົນພື້ນຖານຄ້າງຈ່າຍ

ລາຍຮັບດອກເບ້ຍຈາກເງິນເບີກເກີນບັນຊີ, ເງິນໃຫ້ກູ້ຢືມມີກຳນົດ ແລະ ເງິນໃຫ້ກູ້ຢືມອື່ນໆ ແມ່ນໄດ້ຮັບຮູ້ ໂດຍອີງຕາມໄລຍະເວລາທີ່ເຫຼືອ ເຊິ່ງມີທັງປະຈຳເດືອນ ຫຼື ປະຈຳວັນ.

ເມື່ອລາຍຮັບຂອງສິນເຊື່ອບໍ່ເກີດດອກອອກຜົນ ການຄິດໄລ່ລາຍຮັບດອກເບ້ຍຄວນຢຸດ ແລະ ລາຍຮັບດອກເບ້ຍທີ່ໄດ້ຖືກບັນທຶກແລ້ວ ຈະຖືກກັບລາຍການຄືນ. ລາຍຮັບດອກເບ້ຍຈະຖືກບັນທຶກ ຖ້າ ລາຍຮັບຂອງສິນເຊື່ອທີ່ບໍ່ເກີດດອກອອກຜົນ ຈະເກັບໄດ້ໃນເວລາຕໍ່ມາ. ບັນຊີລູກຄ້າທີ່ເຫັນວ່າ ຈະບໍ່ເກີດດອກອອກຜົນ ເຊິ່ງຄ້າງຊຳລະກາຍສາມເດືອນ ຫຼື 89 ມື້ ຕາມກົດລະບຽບຂອງທະນາຄານແຫ່ງ ສປປ ລາວ.

**ລາຍຈ່າຍດອກເບ້ຍ**

ລາຍຈ່າຍດອກເບ້ຍເງິນຝາກຈາກລູກຄ້າ ຖືກຮັບຮູ້ ຕາມຫຼັກການຄ້າງຈ່າຍ ແລະ ຕາມອັດຕາດອກເບ້ຍທີ່ໄດ້ອະນຸມັດໄວ້.

### 2.5 ການຮັບຮູ້ ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າ

ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າ ຈາກກິດຈະກຳຕ່າງໆຂອງທະນາຄານທີ່ເກີດຂຶ້ນມີດັ່ງນີ້:

(i) ຄ່າທຳນຽມສັນຍາເງິນໃຫ້ກູ້ຢືມ ແລະ ຄ່ານາຍໜ້າ ໃນການບໍລິການ ແລະ ອຳນວຍຄວາມສະດວກໃຫ້ແກ່ລູກຄ້າແມ່ນບັນທຶກຕາມລາຍການເຄື່ອນໄຫວທີ່ເກີດຂຶ້ນ;

(ii) ຄ່າທຳນຽມສັນຍາຜູກພັນ ແລະ ຄ່າທຳນຽມຄ້ຳປະກັນ ແລະ ອຳນວຍຄວາມສະດວກໃຫ້ກັບລູກຄ້າ ຖືເປັນລາຍໄດ້ຄົງທີ່ແບບສະເລ່ຍ ຕະຫຼອດໄລຍະເວລາການໃຫ້ການບໍລິການ ແລະ ອຳນວຍຄວາມສະດວກ.

(iii) ການເກັບຄ່າບໍລິການ ແລະ ຄ່າທຳນຽມການດຳເນີນງານ ແມ່ນຖືກຮັບຮູ້ເມື່ອມີການສະໜອງການບໍລິການ.

### 2.6 ສະກຸນເງິນທີ່ໃຊ້ໃນການເຄື່ອນໄຫວ ແລະ ການປ່ຽນຄ່າເງິນຕາຕ່າງປະເທດ

ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕາຕ່າງປະເທດ ແມ່ນຈະໄດ້ມີການປ່ຽນຄ່າເງິນຕາດັ່ງກ່າວເປັນສະກຸນເງິນກີບ ໃນທ້າຍປີໂດຍໃຊ້ອັດຕາແລກປ່ຽນໃນມື້ຂອງໃບສະຫລຸບຊັບສົມບັດ. ລາຍຮັບ ແລະ ລາຍຈ່າຍ ທີ່ເປັນສະກຸນເງິນຕາຕ່າງປະເທດທີ່ເກີດຂຶ້ນໃນໄລຍະ ຈະຖືກປ່ຽນຄ່າເປັນເງິນສະກຸນເງິນກີບໃນມື້ທີ່ລາຍການເຄື່ອນໄຫວນັ້ນເກີດຂຶ້ນ. ກຳໄລ ແລະ ຂາດທຶນ ຈາກອັດຕາແລກປ່ຽນ ຂອງ ຊັບສິນ ແລະ ໜີ້ສິນ ທາງການເງິນ ແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ເມື່ອລາຍການນັ້ນເກີດຂຶ້ນ.

## 2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

### 2.7 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ປະກອບດ້ວຍ ເງິນສົດ ແລະ ຍອດເຫຼືອຢູ່ທະນາຄານ ແລະ ເງິນຝາກໄລຍະສັ້ນທີ່ມີກຳນົດພາຍໃນ (30) ມື້.

### 2.8 ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ

ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ແມ່ນຈຳນວນເງິນ ທີ່ທະນາຄານ ເອົາເງິນໃຫ້ກັບລູກຄ້າເພື່ອຈຸດປະສົງອື່ນຫຼາຍກ່ວາ ການເກງກຳໄລໄລຍະສັ້ນ. ລາຍການດັ່ງກ່າວແມ່ນ ໄດ້ລາຍງານຕາມຍອດເງິນຕົ້ນທີ່ຍັງຄ້າງ ຫັກເງິນແຮ ເພື່ອສຳຮອງໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກຈາກເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ, ເພື່ອສະແດງຈຳນວນເງິນທີ່ຄາດວ່າຈະສາມາດເກັບກູ້ຄືນໄດ້ ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ, ຍົກເວັ້ນ ເງິນເກີນບັນຊີ ຖືກສະແດງອອກ ບໍ່ລວມດອກເບ້ຍຕ້ອງຮັບ.

### 2.9 ສຳຮອງເງິນສຳລັບໜີ້ເສຍ

ອີງຕາມ ລະບຽບການ ຂອງທະນາຄານແຫ່ງ ສ.ປ.ປ ລາວ, ສະບັບເລກທີ 324/ທຫລ, ລົງວັນທີ 19 ເມສາ 2011, ຮຽກຮ້ອງໃຫ້ຈັດຊັ້ນໜີ້ ແລະສຳຮອງເງິນແຮເພື່ອໜີ້ເສຍ. ດັ່ງນັ້ນ ,ເງິນກູ້ແມ່ນຖືກຈັດຊັ້ນເປັນເງິນກູ້ທີ່ເກີດດອກອອກຜົນ ຫລື ເງິນກູ້ທີ່ບໍ່ເກີດດອກອອກຜົນ ໂດຍອີງຕາມການຄ້າງຊຳລະ ແລະ ປັດໃຈທາງດ້ານຄຸນນະພາບອື່ນໆ. ເງິນກູ້ຖືກຈັດຊັ້ນເປັນເງິນກູ້ປົກກະຕິ(ກຸ່ມA) ຫຼື ເງິນກູ້ທີ່ຄວນເອົາໃຈໃສ່ຫຼືຕິດຕາມພິເສດ(ກຸ່ມB) ແມ່ນຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ຖືກຈັດຊັ້ນເປັນຕ່ຳກ່ວາມາດຕະຖານ(ກຸ່ມC) ຫລືໜີ້ສົງໃສ(ກຸ່ມD) ຫລືໜີ້ສູນ(ກຸ່ມE) ແມ່ນຖືກພິຈາລະນາເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ.

ເງິນສຳຮອງແມ່ນໄດ້ຖືກຈັດປະເພດເປັນ ທົ່ວໄປ ແລະ ສະເພາະ ໂດຍອີງໃສ່ການຈັດປະເພດເງິນໃຫ້ກູ້ຢືມ. ຂ້າງລຸ່ມນີ້ແມ່ນສະຫຼຸບສັງລວມຂອງອັດຕາ ເງິນສຳຮອງ ທີ່ນຳໃຊ້ສຳລັບການຈັດປະເພດເງິນໃຫ້ກູ້ຢືມແຕ່ລະປະເພດ ໃນວັນທີຂອງໃບສະຫລຸບຊັບສົມບັດ.

| ປະເພດ ຂອງໜີ້ | ປະເພດ | ຈຳນວນມື້ເກີນກຳນົດ | ການຫັກເງິນແຮ |
|---|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ(ທົ່ວໄປ) | | | |
| A | ໜີ້ປົກກະຕິ | ຕ່ຳກ່ວາ 29 ມື້ | 0.5%-1% |
| B | ໜີ້ຄວນເອົາໃຈໃສ່ | 30 ຫາ 89 ມື້ | 3% |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ(ສະເພາະ) | | | |
| C | ໜີ້ຕ່ຳກ່ວາມາດຕະຖານ | 90 ຫາ 179 ມື້ | 20% |
| D | ໜີ້ສົງໃສ | 180 ຫາ 359 ມື້ | 50% |
| E | ໜີ້ສູນ | ຫຼາຍກວ່າ 360 ມື້ | 100% |

### 2.10 ຊັບສິນຄົງທີ່ບໍ່ມີຕົວຕົນ

ການໄດ້ມາ ຂອງໃບອະນຸຍາດໂປແກຼມຄອມພິວເຕີ ແມ່ນບັນທຶກເປັນຕົ້ນທຶນບົນພື້ນຖານລາຍຈ່າຍທີ່ເກີດຂຶ້ນຕົວຈິງ ແລະ ນຳໃຊ້ໂປແກຼມສະເພາະ. ລາຍຈ່າຍ ສຳລັບໃບອະນຸຍາດໂປແກຼມຄອມພິວເຕີ ແມ່ນຈະໄດ້ນຳເອົາຕົ້ນທຶນຫັກຄ່າຫລຸ້ຍຫ້ຽນສະສົມ ແລະ ຂາດທຶນຈາກການດ້ອຍຄ່າ. ລາຍຈ່າຍຕົ້ນທຶນນີ້ແມ່ນຈະຖືກຫັກຄ່າເສື່ອມມູນຄ່າຕະຫຼອດອາຍຸການໃຊ້ງານຄາດຄະເນ 5 ເຖິງ 10 ປີ ເຊິ່ງອາຍຸການນຳໃຊ້ແມ່ນອີງຕາມກົດໝາຍສ່ວຍສາອາກອນ.

## 2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

### 2.11 ຊັບສິນຄົງທີ່ທີ່ມີຕົວຕົນ

ລາຍການຂອງຊັບສິນຄົງທີ່ ແມ່ນສະແດງໃນລາຄາຕົ້ນທຶນຫັກດ້ວຍຄ່າຫຼູ້ຍຫ້ຽນສະສົມ ແລະ ຄ່າເຊື່ອມມູນຄ່າ

ຄ່າຫຼູ້ຍຫ້ຽນຂອງຊັບສິນບັດຄົງທີ່ແມ່ນໃຊ້ ວິທີການຄິດໄລ່ແບບສະໝ່ຳສະເໝີ ໂດຍການຄາດຄະເນຈາກອະຍຸການນຳໃຊ້ງານຂອງຊັບສິນແຕ່ລະ ລາຍການໃນອັດຕາຕໍ່ປີດັ່ງຕໍ່ໄປນີ້

| ປະເພດຊັບສິນບັດ | ອັດຕາການຫັກຄ່າຫຼູ້ຍຫ້ຽນ |
|---|---|
| ພາຫະນະ | 20% |
| ເຄື່ອງໃຊ້ຫ້ອງການ | 20% |
| ເຟີນີເຈີ ແລະ ເຄື່ອງຕິດຕັ້ງ | 20% |
| ການປັບປຸງອາຄານ | 5% |
| ອຸປະກອນຄອມພີວເຕີ | 20% |

ມູນຄ່າຄົງເຫຼືອຂອງຊັບສິນ ແລະ ອາຍຸການນຳໃຊ້ແມ່ນຈະມີການຕີມູນຄ່າຄືນໃໝ່ ແລະ ປັບປຸງຕາມຄວາມເໝາະສົມ ໃນວັນທີສິ້ນສຸດການລາຍງານ. ບໍ່ມີການປັບປຽນຊັບສິນຈາກການກວດສອບ ຈະຕ້ອງສະແດງໃຫ້ເຫັນໃນໃນໃບລາຍງານການເງິນ.

ກຳໄລ ຫຼື ຂາດທຶນຈາກການຂາຍ ຈະຖືກກຳນົດໂດຍໄດ້ຮັບມູນຄ່າທາງບັນຊີ ແລະ ລວມກຳໄລ ທີ່ບໍ່ແມ່ນດອກເບ້ຍ ຢູ່ໃນໃບລາຍງານຜົນໄດ້ຮັບ. ໃນວັນສິ້ນສຸດການລາຍງານ, ທະນາຄານໄດ້ປະເມີນວ່າມີຂໍ້ຜິດພາດໃນຄ່າເຊື່ອມມູນຄ່າ. ສະແດງໃຫ້ເຫັນເຖິງຄ່າເຊື່ອມມູນຄ່າ ຂອງມູນຄ່າທາງບັນຊີຂອງຊັບສິນ ທີ່ຈະຖືກບັນທຶກລົງໃນການຕີມູນຄ່າຄືນ.

### 2.12 ເງິນຝາກ

ພາຍໃຕ້ກົດໝາຍວ່າດ້ວຍທະນາຄານການຄ້າ ລົງວັນທີ່ 16 ມັງກອນ 2007, ທຸກໆ ທະນາຄານການຄ້າ ຈະຕ້ອງໄດ້ແບ່ງສ່ວນກຳໄລສຸດທິເພື່ອສຳຮອງ ເງິນສຳຮອງຕາມລະບຽບການ, ເງິນສຳຮອງສຳລັບການຂະຫຍາຍທຸລະກິດ ແລະ ເງິນສຳຮອງອື່ນໆ.

### 2.13 ການເຊົ່າ ທະນາຄານເປັນຜູ້ເຊົ່າ

ສັນຍາເຊົ່າ ບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນ ໃຫ້ແກ່ຜູ້ເຊົ່າ ຈຶ່ງຈຳແນກເປັນສັນຍາເຊົ່າທົ່ວໄປ (ສັນຍາເຊົ່າໃນການທຸລະກິດ). ການຊຳລະຄ່າເຊົ່າ ພາຍໃຕ້ສັນຍາເຊົ່າທົ່ວໄປ (ລົບທຸກລາຍການ ທີ່ໄດ້ຮັບ ຈາກຜູ້ໃຫ້ເຊົ່າ) ໄດ້ຈົດເປັນລາຍຈ່າຍ ໃນໃບລາຍງານຜົນໄດ້ຮັບ ບົນພື້ນຖານວິທີສະເລ່ຍ ຕະຫຼອດ ໄລຍະອາຍຸການເຊົ່າ.

ການຊຳລະເງິນລ່ວງໜ້າເພື່ອສິດໃນການນຳໃຊ້ທີ່ດິນ ແມ່ນຈະຖືກຫັກໂດຍກົງຕະຫຼອດອາຍຸການນຳໃຊ້ ເມື່ອການເຊົ່າໃນການດຳເນີນງານໄດ້ຖືກຍົກເລີກກ່ອນກຳນົດ ແມ່ນຈະຕ້ອງໄດ້ມີການຈ່າຍຄ່າປັບໄໝ ໂດຍຈະຖືກບັນທຶກເມື່ອມີການຍົກເລີກສັນຍາ

### 2.14 ຜົນປະໂຫຍດຂອງພະນັກງານ

ກ.) ຜົນປະໂຫຍດຂອງພະນັກງານໄລຍະສັ້ນ.

ຄ່າຈ້າງ, ເງິນເດືອນ, ມື້ພັກປະຈຳປີ ແລະ ການລາປ່ວຍ, ໂບນັດ ແລະ ຜົນປະໂຫຍດທີ່ບໍ່ເປັນເງິນ ທີ່ຈະເກີດຂຶ້ນໃນປີທີ່ກ່ຽວຂ້ອງກັບການປະຕິບັດງານຂອງພະນັກງານທະນາຄານ.

## 2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

### 2.14 ຜົນປະໂຫຍດຂອງພະນັກງານ (ຕໍ່)

ຂ.) ຜົນປະໂຫຍດຂອງພະນັກງານຫຼັງອອກຈາກງານ

ຜົນປະໂຫຍດຂອງພະນັກງານຫຼັງອອກຈາກງານ ໄດ້ຖືກຈ່າຍໃຫ້ພະນັກງານທີ່ໄດ້ອອກຈາກງານຂອງທະນາຄານ ໂດຍ ອີງການປະກັນສັງຄົມ ເຊິ່ງຂຶ້ນ ກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ທາງທະນາຄານຈະຕ້ອງມີສ່ວນຮ່ວມໃນ ຜົນປະໂຫຍດນີ້ ດ້ວຍການຈ່າຍເບ້ຍ ປະກັນສັງຄົມໃຫ້ແກ່ໜ່ວຍງານປະກັນສັງຄົມ ດ້ວຍອັດຕາ 5% ຂອງເງິນເດືອນພື້ນຖານຂອງພະນັກງານ. ທະນາຄານບໍ່ມີຂໍ້ຜູກພັນ ນອກເໜືອຈາກ ຜົນປະໂຫຍດຂອງພະນັກງານນີ້ ສຳລັບ ພະນັກງານຄົນອື່ນໆ.

ຄ.) ຜົນປະໂຫຍດເມື່ອເລີກຈ້າງງານ

ອີງຕາມມາດຕາທີ 90 ຂອງກົດໝາຍແຮງງານ ເຊິ່ງອອກໂດຍ ປະທານປະເທດ ໃນວັນທີ 24 ທັນວາ 2013, ທາງທະນາຄານຍັງຕ້ອງໄດ້ຈ່າຍເງິນໃຫ້ແກ່ພະນັກງານ ຜູ້ທີ່ຖືກເລີກຈ້າງງານດ້ວຍກໍລະນີດັ່ງຕໍ່ໄປນີ້:

- ເງິນຊົດເຊີຍສຳລັບການຍົກເລີກສັນຍາການຈ້າງງານທີ່ຈະໄດ້ຮັບແມ່ນ 10% ຂອງເງິນເດືອນ ເດືອນສຸດທ້າຍ ຄູນໃຫ້ຈຳນວນເດືອນທີ່ເຮັດວຽກ;
- ສຳລັບເງິນຊົດເຊີຍໃນການຍົກເລີກສັນຍາການຈ້າງງານ ຕາມກົດໝາຍແຮງງານສະບັບປັບປຸງ ແມ່ນຈະໄດ້ຮັບ 15% ຂອງເງິນເດືອນ ເດືອນສຸດທ້າຍຄູນໃຫ້ຈຳນວນເດືອນທີ່ເຮັດວຽກ; ແລະ
- ການຍົກເລີກສັນຍາຈ້າງງານສຳລັບເຫດຜົນທີ່ບໍ່ໄດ້ລະບຸໄວ້ໃນກົດໝາຍແຮງງານສະບັບປັບປຸງ, ທະນາຄານຕ້ອງດ□າເນີນການຊົດເຊີຍຕາມສັນຍາຈ້າງງານລະຫວ່າງທະນາຄານ ແລະ ລູກຈ້າງ.

### 2.15 ເງິນແຮ

ເງິນແຮ ຖືກຮັບຮູ້ໃນເອກະສານລາຍງານການເງິນ ເມື່ອທະນາຄານ ມີຂໍ້ຜູກພັນທາງດ້ານກົດໝາຍ ຫຼື ມີພັນທະ ເນື່ອງຈາກເຫດການຜ່ານມາ ແລະ ເປັນໄປໄດ້ວ່າ ການໄຫຼຂອງຜົນປະໂຫຍດທາງເສດຖະກິດ ຈະມີການຊຳລະພັນທະດັ່ງກ່າວ ແລະ ການຄາດຄະເນທີ່ສາມາດປະຕິບັດໄດ້.

### 2.16 ອາກອນ

ການເກັບອາກອນກຳໄລໃນປີ, ຂຶ້ນກັບກົດໝາຍສ່ວຍສາອາກອນ ວ່າດ້ວຍ ການເກັບອາກອນໃນ ສ.ປ.ປ.ລາວ. ທະນາຄານ ສະເລ່ຍ 24% (2014: 24%) ຂອງອາກອນກຳໄລທັງໝົດ, ແລະ ຈະຕ້ອງຈ່າຍຕາມແຕ່ລະໄຕມາດ. (ອີງຕາມ ມາດຕາທີ 29: ອັດຕາອາກອນກຳໄລ, ກົດໝາຍອາກອນ ເລກທີ 05/ສພຊ. ລົງວັນທີ 20/12/2011).

ຜົນຂາດທຶນອາກອນທີ່ເກີດຂຶ້ນໃນປີ ສາມາດຍົກຍອດໄປຫັກຕໍ່ກັບຜົນກຳໄລໄດ້ຮັບຮູ້ ຂາດທຶນອາກອນ ສາມປີ ທີ່ເກີດຂຶ້ນແມ່ນໄດ້ຮັບຮອງໂດຍ ອົງການກວດສອບແຫ່ງລັດ ຫລື ບໍລິສັດກວດສອບເອກະລາດ ແລະ ໄດ້ຮັບຮູ້ຈາກເຈົ້າໜ້າທີ່ສ່ວຍສາອາກອນ. ເມື່ອເກີນກຳນົດ ສາມປີ, ການຂາດທຶນທີ່ຍັງບໍ່ໄດ້ຫັກນັ້ນຈະບໍ່ສາມາດຫັກອອກຈາກກຳໄລ. ຕາມກົດໝາຍສ່ວຍສາອາກອນ ສະບັບປັບປຸງ ມາດຕາ 39: ຍອດຂາດທຶນທີ່ຍົກມາປະຈຳປີ.

## 2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

### 2.17 ພາກສ່ວນທີ່ກ່ຽວຂ້ອງ

ນິຕິບຸກຄົນ ຫຼື ບຸກຄົນ, ທີ່ມີການຄວບຄຸມໂດຍ ທາງກົງ ຫຼື ທາງອ້ອມ ໜຶ່ງ ຫຼື ຫຼາຍກ່ວາ ຫຼື ຖືກຄວບຄຸມໂດຍຫົວໜ່ວຍອື່ນ ຫຼື ພາຍໃຕ້ການຄວບຄຸມແບບດຽວກັນກັບກິດຈະການທະນາຄານ ລວມທັງບໍລິສັດທີ່ຖືຮຸ້ນ, ບໍລິສັດໃນເຄືອ, ບໍລິສັດຍ່ອຍໃນກຸ່ມ ແລະ ບັນດາສາຂາຍ່ອຍ ລ້ ວນແຕ່ເປັນພາກສ່ວນທີ່ກ່ຽວຂ້ອງກັນ. ນິຕິບຸກຄົນ ແລະ ບຸກຄົນທີ່ເປັນເຈົ້າຂອງໂດຍກົງ ຫຼື ທາງອ້ອມ ທີ່ມີສິດອຳນາດໃນການລົງຄະແນນ ເຊິ່ງມີອິດທິພົນສຳຄັນຕໍ່ກັບທະນາຄານ, ຜູ້ບໍລິຫານ ລວມທັງ ຜູ້ອຳນວຍການ ຫຼື ພະນັກງານ ຂອງທະນຄານ ແລະ ສະມາຊິກໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດທີ່ກ່ຽວຂ້ອງກັນກັບບຸກຄົນເຫຼົ່ານີ້ ຍັງຖືເປັນພາກສ່ວນກ່ຽວຂ້ອງກັນ.

ໃນພິຈາລະນາຄວາມສຳພັນລະຫວ່າງພາກສ່ວນທີ່ກ່ຽວຂ້ອງກັນ ເອົາໃຈໃສ່ເນື້ອໃນຄວາມສຳພັນ ແລະ ບໍ່ພຽງແຕ່ຮູບແບບທາງດ້ານກົດໝາຍ.

## 3. ນະໂຍບາຍການບໍລິຫານຄວາມສ່ຽງດ້ານການເງິນ

ຂໍ້ແນະນຳ ແລະ ນະໂຍບາຍການບໍລິຫານຄວາມສ່ຽງດ້ານການເງິນ ທີ່ຮັບຮອງເອົາໂດຍທະນາຄານ ເພື່ອບໍລິຫານຄວາມສ່ຽງທີ່ເກີດຂຶ້ນຈາກການດຳເນີນທຸລະກິດ ດັ່ງລຸ່ມນີ້:

### 3.1 ຄວາມສ່ຽງດ້ານສິນເຊື່ອ

ຄວາມສ່ຽງດ້ານສິນເຊື່ອ ແມ່ນການສູນເສຍທີ່ອາດເກີດຂຶ້ນ ຂອງລາຍຮັບ ແລະ ຕົ້ນທຶນ ໃນຮູບແບບຂອງການຕັ້ງສຳຮອງທີ່ລູກໜີ້ ຫຼື ຄູ່ສັນຍາຂອງທະນາຄານ ບໍ່ສາມາດປະຕິບັດໄດ້ຕາມສັນຍາທີ່ກ່ຽວຂ້ອງກັບການໃຫ້ສິນເຊື່ອການລົງທຶນ ຜົນເສຍຫາຍສູງສຸດຂອງຄວາມສ່ຽງດ້ານສິນເຊື່ອເກີດຈາກເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ. ເຊິ່ງຜົນເສຍຫາຍ ແມ່ນໝາຍເຖິງມູນຄ່າຕາມບັນຊີຂອງຊັບສິນໃນໃບສະຫລຸບຊັບສິນບັດ. ທະນາຄານໄດ້ກຳນົດນະໂຍບາຍສິນເຊື່ອເພື່ອຄວບຄຸມຄວາມສ່ຽງດ້ານສິນເຊື່ອເຊັ່ນຄວາມສາມາດໃນການຊຳລະຄືນເງິນກູ້ ລວມເຖິງລະດັບຄວາມສ່ຽງຂອງສິນເຊື່ອນະໂຍບາຍສິນເຊື່ອໄດ້ລະບຸເຖິງນະໂຍບາຍການໃຫ້ກູ້ຢືມ, ນະໂຍບາຍກ່ຽວກັບຫຼັກຊັບຄ້ຳປະກັນ ແລະ ຂັ້ນຕອນໃນການອະນຸມັດສິນເຊື່ອ ແມ່ນການຄວບຄຸມການປ່ອຍສິນເຊື່ອ ແລະ ຄູ່ມືການເກັບຄືນ, ຄູ່ມືການດຳເນີນງານໃນການປ່ອຍສິນເຊື່ອ, ແລະ ຄູ່ມືນະໂຍບາຍການປ່ອຍສິນເຊື່ອ. ຄວາມສ່ຽງຕໍ່ການປ່ອຍສິນເຊື່ອແມ່ນມີຄວາມສ່ຽງທີ່ໃຫຍ່ທີ່ສຸດສຳລັບທຸລະກິດຂອງທະນາຄານ; ຜູ້ບໍລິຫານ ຈຶ່ງລະມັດລະວັງຄຸ້ມຄອງຄວາມສ່ຽງໃນການປ່ອຍສິນເຊື່ອ.

### 3.2 ຄວາມສ່ຽງດ້ານຕະຫຼາດ

ຄວາມສ່ຽງດ້ານຕະຫຼາດ ແມ່ນຄວາມສ່ຽງຂອງການສູນເສຍທີ່ເກີດຂຶ້ນຈາກການເຄື່ອນໄຫວ ທີ່ບໍ່ເອື້ອອຳນວຍໃນລະດັບຂອງລາຄາ ຫຼື ອັດຕາດອກເບ້ຍ, ໃນຕະຫຼາດມີສອງອົງປະກອບຫຼັກ ຄື: ຄວາມສ່ຽງອັດຕາແລກປ່ຽນເງິນຕາຕ່າງປະເທດ ແລະ ຄວາມສ່ຽງຈາກອັດຕາດອກເບ້ຍ.

*(i) ຄວາມສ່ຽງຈາກການແລກປ່ຽນເງິນຕາຕ່າງປະເທດ*

ຄວາມສ່ຽງອັດຕາແລກປ່ຽນເງິນຕ່າງປະເທດ ໝາຍເຖິງ ການເຄື່ອນໄຫວຂອງອັດຕາແລກປ່ຽນທີ່ກະທົບຕໍ່ອັດຕາແລກປ່ຽນເງິນຕ່າງປະເທດເປັນແຕ່ລະໄລຍະ. ທະນາຄານຍັງຄົງຮັກສານະໂຍບາຍໃນການຄວບຄຸມບໍ່ໃຫ້ເກີດຄວາມສ່ຽງຫຼາຍຈາກອັດຕາແລກປ່ຽນ. ຄວາມສ່ຽງທີ່ເກີດຈາກການແລກປ່ຽນເງິນຕາຕ່າງປະເທດ ແມ່ນມີການຕິດຕາມ, ຄວບຄຸມເບິ່ງແຍງ ໃຫ້ສອດຄ່ອງກັບການດຳເນີນງານ ແລະ ມີການກຳນົດລະດັບຄວາມສ່ຽງທີ່ຮັບໄດ້ ແລະ ການຮັບຮູ້ຜົນຂາດທຶນ.

## 3. ນະໂຍບາຍການບໍລິຫານຄວາມສ່ຽງດ້ານການເງິນ (ຕໍ່)

### 3.2 ຄວາມສ່ຽງດ້ານຕະຫຼາດ (ຕໍ່)

*(ii) ຄວາມສ່ຽງຈາກອັດຕາດອກເບ້ຍ*

ຄວາມສ່ຽງຈາກອັດຕາດອກເບ້ຍໝາຍເຖິງ ຄວາມສ່ຽງ ຈາກຄວາມຜັນຜວນ ຂອງລາຍໄດ້ດອກເບ້ຍສຸດທິ ຊຶ່ງເປັນຜົນມາຈາກ ການປ່ຽນແປງຂອງລະດັບອັດຕາດອກເບ້ຍ ແລະ ຈະມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນ. ຄວາມສ່ຽງຈາກອັດຕາດອກເບ້ຍມີການບໍລິຫານຈັດການ ໂດຍການຄວບຄຸມເບິ່ງແຍງຢ່າງໃກ້ຊິດ ໂດຍຄິດໄລ່ຜົນການຕອບແທນຈາກການລົງທຶນ ຂອງອັດຕາດອກເບ້ຍໃນຕະຫຼາດ ຕົ້ນທຶນຂອງເງິນກູ້ຢືມ ແລະ ການວິເຄາະ ຄວາມແຕກຕ່າງຂອງອັດຕາດອກເບ້ຍ. ຄວາມສ່ຽງທີ່ເກີດຈາກການປ່ຽນແປງອັດຕາດອກເບ້ຍຈະຖືກຄວບຄຸມໃຫ້ ຈໍານວນຈໍາກັດ.

### 3.3 ຄວາມສ່ຽງດ້ານສະພາບຄ່ອງ

ຄວາມສ່ຽງດ້ານສະພາບຄ່ອງກ່ຽວຂ້ອງກັບຄວາມສາມາດໃນການຮັກສາຊັບສິນ ຄ່ອງຕົວ ມີພຽງພໍຕໍ່ພາລະຜູກພັນທາງການເງິນ ແລະ ພັນທະ ເມື່ອເຖິງກໍານົດເວລາສະສາງ. ຜູ້ບໍລິຫານຂອງທະນາຄານໄດ້ຕິດຕາມຢ່າງໃກ້ຊິດທຸກໆການເຄື່ອນໄຫວຂອງກະແສເຂົ້າ ແລະ ອອກ ຕາມວັນເວລາທີ່ກໍານົດໄວ້. ທຸກລາຍການເຄື່ອນໄຫວຂອງເງິນໃຫ້ກູ້ຢືມ ແລະ ເງິນຝາກຈາກລູກຄ້າ ແມ່ນຖືກຕິດຕາມສະພາບຄ່ອງເພື່ອໃຫ້ແນ່ໃຈວ່າຊັບສິນດັ່ງກ່າວສາມາດດັດປັບໃຫ້ພຽງພໍກັບຈຸດປະສົງທາງດ້ານການເງິນ ແລະ ພາລະຜູກພັນເມື່ອເຖິງກໍານົດ.

## 4. ເງິນສົດ ແລະ ຍອດເຫຼືອກັບທະນາຄານກາງ

| | 2015<br>ກີບ | 2014<br>ກີບ |
|---|---:|---:|
| ເງິນສົດໃນມື(ບົດອະທິບາຍ 4.1) | 7.964.755.825 | 1.650.155.420 |
| ຍອດເງິນອື່ນໆ ໃນທະນາຄານກາງ ນອກຈາກເງິນຝາກສໍາຮອງ (ບົດອະທິບາຍ 4.2) | 73.199.303.186 | 13.545.667.864 |
| **ລວມຢູ່ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ (ບົດອະທິບາຍ 6)** | **81.164.059.011** | **15.195.823.284** |
| ເງິນຝາກສໍາຮອງຕາມລະບຽບການກັບທະນາຄານກາງ (ບົດອະທິບາຍ 4.3) | 61.476.241.579 | 193.872.653.458 |
| | **142.640.300.590** | **209.068.476.742** |

### 4.1 ເງິນສົດໃນມື

| | 2015<br>ກີບ | 2014<br>ກີບ |
|---|---:|---:|
| ເງິນສົດໃນມື – ສະກຸນເງິນກີບ | 4.357.139.000 | 685.000.000 |
| ເງິນສົດໃນມື – ສະກຸນເງິນຕາຕ່າງປະເທດ | 3.607.616.825 | 965.155.420 |
| | **7.964.755.825** | **1.650.155.420** |

## 4. ເງິນສົດ ແລະ ຍອດເຫຼືອກັບທະນາຄານກາງ (ຕໍ່)

### 4.2 ຍອດເຫຼືອຢູ່ທະນາຄານກາງ ນອກເໜືອຈາກເງິນຝາກແຮບັງຄັບ

ເງິນຝາກກັບທະນາຄານກາງເພື່ອການຊໍາລະສະສາງອື່ນໆ ແລະ ເງິນຝາກບັງຄັບທີ່ບໍ່ມີດອກເບ້ຍ.

| | 2015<br>ກີບ | 2014<br>ກີບ |
|---|---|---|
| ເງິນຝາກຕາມຮຽກຮ້ອງຕ້ອງການ | **73.199.303.186** | **13.545.667.864** |

### 4.3 ເງິນຝາກຕາມລະບຽບການກັບທະນາຄານແຫ່ງ ສປປ ລາວ

ເງິນຝາກຕາມລະບຽບການກັບທະນາຄານແຫ່ງ ສປປ ລາວ ແມ່ນນໍາສະເໜີໃນບັນຊີປະຈຸບັນ ເຊິ່ງບໍ່ມີດອກເບ້ຍ.

| | 2015<br>ກີບ | 2014<br>ກີບ |
|---|---|---|
| ສຳຮອງຕາມລະບຽບການ (i) | 2.721.165.363 | 873.686.458 |
| ເງິນຝາກພິເສດ (ii) | 58.755.076.216 | 192.998.967.000 |
| | **61.476.241.579** | **193.872.653.458** |

(i) ມີເງິນຝາກທີ່ຮັກສາໄວ້ກັບທະນາຄານກາງຕາມລະບຽບການ. ຍອດເງິນທີ່ຄິດໄລ່ແມ່ນເງິນກີບຄິດໄລ່ 5% ແລະ ເງິນໂດລາ ແລະ ເງິນບາດ ຄິດໄລ່ 10% ຂອງຍອດເງິນຝາກທັງໝົດທີ່ລູກຄ້າຝາກນໍາທະນາຄານເຊັ່ນ: ເງິນຝາກປະຢັດ, ຝາກກະແສລາຍວັນ ແລະ ຝາກມີກໍານົດໃນປີ. ເງິນຝາກຕາມລະບຽບການນີ້ແມ່ນບໍ່ມີດອກເບ້ຍ.

(ii) ທະນາຄານຍັງຮັກສາຕົ້ນທຶນເງິນຝາກກັບທະນາຄານ ແຫ່ງ ສປປ ລາວ ຈໍານວນເງິນຝາກນີ້ຖືເປັນຫຼັກປະກັນໃນການດໍາເນີນງານຂອງທະນາຄານ. ໃນກົດໝາຍສະບັບປັບປຸງບໍ່ໄດ້ລະບຸເປີເຊັນ ຫຼື ຮັກສາເງິນແຮ. ເງິນຝາກນີ້ແມ່ນບໍ່ໄດ້ຮັບດອກ.

## 5. ເງິນຝາກໃນທະນາຄານອື່ນ

ເງິນຝາກໃນທະນາຄານອື່ນໄດ້ວິເຄາະດັ່ງລຸ່ມນີ້:

### *ກ) ວິເຄາະຕາມສະຖາບັນການເງິນ*

| | 2015<br>ກີບ | 2014<br>ກີບ |
|---|---|---|
| **ຍອດເຫຼືອກັບທະນາຄານພາຍໃນປະເທດ** | | |
| ທະນາຄານ ພາບລິກ ມະຫາຊົນ - ສາຂາ ນະຄອນຫຼວງວຽງຈັນ | 23.209.450.000 | 17.461.000.000 |
| ທະນາຄານກະສິກອນໄທ ມະຫາຊົນ - ສາຂາ ນະຄອນຫຼວງວຽງຈັນ | - | 10.000.000.000 |
| ທະນາຄານລາວ-ຝລັ່ງ ຈຳກັດ - ສາຂາ ນະຄອນຫຼວງວຽງຈັນ | 16.296.000 | - |
| | **23.225.746.000** | **27.461.000.000** |
| **ຍອດເຫຼືອກັບທະນາຄານໃນຕ່າງປະເທດ** | | |
| ທະນາຄານ ອາ ເຮັສ ບີ – ປະເທດ ໄທ | 168.615.916 | 123.250.000 |
| ທະນາຄານ ອາ ເຮັສ ບີ – ປະເທດ ມາເລເຊຍ | 349.184.658 | 403.300.000 |
| | **517.800.574** | **526.550.000** |
| **ລວມຢູ່ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ (ບົດອະທິບາຍ 6)** | **23.743.546.574** | **27.987.550.000** |

### *ຂ) ວິເຄາະແບ່ງຕາມສະກຸນເງິນ*

| | 2015<br>ກີບ | 2014<br>ກີບ |
|---|---|---|
| **ສະກຸນເງິນກັບທະນາຄານພາຍໃນປະເທດ** | | |
| ກີບ | 10.000.000.000 | 12.000.000.000 |
| ໂດລາ | 5.719.896.000 | 8.066.000.000 |
| ບາດ | 7.505.850.000 | 7.395.000.000 |
| | **23.225.746.000** | **27.461.000.000** |
| **ສະກຸນເງິນກັບທະນາຄານໃນຕ່າງປະເທດ** | | |
| ໂດລາ | 349.184.658 | 403.300.000 |
| ບາດ | 168.615.916 | 123.250.000 |
| | **517.800.574** | **526.550.000** |
| | **23.743.546.574** | **27.987.550.000** |

## 6. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ເງິນສົດ ແລະ ຍອດເຫຼືອຢູ່ກັບທະນາຄານກາງ (ບົດອະທິບາຍຂໍ້ທີ 4) | 81.164.059.011 | 15.195.823.284 |
| ເງິນຝາກກັບທະນາຄານອື່ນ (ບົດອະທິບາຍຂໍ້ທີ 5) | 23.743.546.574 | 27.987.550.000 |
| | **104.907.605.585** | **43.183.373.284** |

## 7. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | 194.340.581.523 | 81.233.241.150 |
| | **194.340.581.523** | **81.233.241.150** |

ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າໄດ້ວິເຄາະດັ່ງລຸ່ມນີ້:

### ກ. ວິເຄາະແບ່ງຕາມສະກຸນເງິນ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ກີບ | 96.183.908.385 | 17.973.253.144 |
| ໂດລາ | 83.559.788.326 | 50.019.266.852 |
| ບາດ | 14.596.884.812 | 13.240.721.154 |
| | **194.340.581.523** | **81.233.241.150** |

### ຂ. ວິເຄາະແບ່ງຕາມປະເພດເງິນໃຫ້ກູ້ຢືມ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ເງິນກູ້ຢືມເຄື່ອນໄຫວປົກກະຕິ | 194.340.581.523 | 81.233.241.150 |
| ເງິນກູ້ຢືມເຄື່ອນໄຫວບໍ່ປົກກະຕິ | - | - |
| | **194.340.581.523** | **81.233.241.150** |

## 7. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (ຕໍ່)

### ຄ. ການຈັດປະເພດໂດຍ ທະນາຄານ ແຫ່ງ ສປປ ລາວ

| | 2015<br>ກີບ | 2014<br>ກີບ |
|---|---|---|
| **ເງິນກູ້ຢືມເຄື່ອນໄຫວປົກກະຕິ** | | |
| ປົກກະຕິ | 193.682.992.947 | 81.233.241.150 |
| ເອົາໃຈໃສ່ | 657.588.576 | - |
| **ເງິນກູ້ຢືມເຄື່ອນໄຫວບໍ່ປົກກະຕິ** | | |
| ຕ່ຳກວ່າມາດຕະຖານ | - | - |
| ໜີ້ສົງໃສ | - | - |
| ໜີ້ເສຍ | - | - |
| | **194.340.581.523** | **81.233.241.150** |

### *ງ. ຕາມສາຍສຳພັນ*

| | 2015<br>ກີບ | 2014<br>ກີບ |
|---|---|---|
| ພະນັກງານ | - | - |
| ລູກຄ້າ | 194.340.581.523 | 81.233.241.150 |
| | **194.340.581.523** | **81.233.241.150** |

### *ຈ. ຕາມຂະແໜງການເສດຖະກິດ*

| | 2015<br>ກີບ | 2014<br>ກີບ |
|---|---|---|
| ຂະແໜງອຸດສາຫະກຳ | 17.013.691.280 | 14.114.709.573 |
| ຂະແໜງການກໍ່ສ້າງ | 15.607.278.562 | 4.013.915.625 |
| ຂະແໜງການຂົນສົ່ງ ແລະ ສື່ສານ | 37.442.693.878 | - |
| ຂະແໜງການບໍລິຫານ | 2.855.093.095 | 4.101.301.920 |
| ຂະແໜງການອື່ນໆ(i) | 71.796.290.801 | 31.670.023.633 |
| ຂະແໜງອຸດສາຫະກຳ | 49.625.533.907 | 27.333.290.399 |
| | **194.340.581.523** | **81.233.241.150** |

(i) ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າໃນຂະແໜງອຸດສາຫະກຳອື່ນໆທີ່ລວມມີ ການເງິນ ແລະ ການຄ້າ.

## 7. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (ຕໍ່)

### *ສ. ຕາມພູມລຳເນົາ*

| | 2015<br>ກີບ | 2014<br>ກີບ |
|---|---|---|
| ຢູ່ພາຍໃນປະເທດ | 194.340.581.523 | 81.233.241.150 |
| ຢູ່ຕ່າງປະເທດ | - | - |
| | **194.340.581.523** | **81.233.241.150** |

### *ຊ. ຕາມຄວາມປອດໄພ*

| | 2015<br>ກີບ | 2014<br>ກີບ |
|---|---|---|
| ປອດໄພ | 194.340.581.523 | 81.233.241.150 |
| ບໍ່ປອດໄພ | - | - |
| | **194.340.581.523** | **81.233.241.150** |

## 8. ເງິນແຮທົ່ວໄປສຳລັບເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ

ການເຄື່ອນໄຫວ ຂອງການສຳຮອງສຳລັບເງິນໃຫ້ກູ້ຢືມ ດັ່ງຕໍ່ໄປນີ້:

| | 2015<br>ກີບ | 2014<br>ກີບ |
|---|---|---|
| **ເງິນແຮທົ່ວໄປ** | | |
| ຍອດເຫຼືອຕົ້ນປີ | 406.165.470 | - |
| ສຳຮອງລາຍຈ່າຍໃນປີ | 591.828.444 | 406.165.470 |
| ສ່ວນຕ່າງຈາກອັດຕາແລກປ່ຽນ | (2.573.840) | - |
| **ໃນວັນທີ 31 ທັນວາ** | **995.420.074** | **406.165.470** |

ການຈັດປະເພດໃນວັນທີ 31 ທັນວາ 2015 ແລະ 2014 ດັ່ງຕໍ່ໄປນີ້:

| | 2015<br>ກີບ | 2014<br>ກີບ |
|---|---|---|
| **ສິນເຊື່ອເກີດດອກອອກຜົນ (ທົ່ວໄປ)** | | |
| ປົກກະຕິ | 975.692.417 | 406.165.470 |
| ເອົາໃຈໃສ່ | 19.727.657 | - |
| **ສິນເຊື່ອບໍ່ເກີດດອກອອກ (ສະເພາະ)** | | |
| ຕ່ຳກວ່າມາດຕະຖານ | - | - |
| ໜີ້ສົງໃສ | - | - |
| ໜີ້ເສຍ | - | - |
| | **995.420.074** | **406.165.470** |

## 9. ອາຄານ ແລະ ອຸປະກອນ

ການເຄື່ອນໄຫວກ່ຽວກັບຍອດເຫຼືອຂອງອາຄານ ແລະ ອຸປະກອນ ຂອງທ້າຍປີ ວັນທີ 31 ທັນວາ 2015 ມີດັ່ງນີ້:

| | ອາຄານ ແລະ ການປັບປຸງ<br>ກີບ | ເຄື່ອງໃຊ້ຫ້ອງການ<br>ກີບ | ຄອມພິວເຕີ<br>ກີບ | ເຟີນີເຈີ້ ແລະ ສິ່ງຕິດຕັ້ງ<br>ກີບ | ຍານພາຫະນະ<br>ກີບ | ລວມ<br>ກີບ |
|---|---|---|---|---|---|---|
| **ຕົ້ນທຶນ :** | | | | | | |
| ໃນວັນທີ 1 ມັງກອນ 2015 | 8.191.729.416 | 287.321.375 | 7.737.344.314 | 9.991.790 | 1.178.586.392 | **17.404.973.287** |
| ເພີ່ມທຶນ | - | - | 69.686.441 | 590.127.072 | - | **659.813.513** |
| ລາຍການປັບປຸງ | (745.171.796) | - | (314.125.221) | - | | **(1.059.297.017)** |
| **ໃນວັນທີ 31 ທັນວາ 2015** | **7.446.557.620** | **287.321.375** | **7.492.905.534** | **600.118.862** | **1.178.586.392** | **17.005.489.783** |
| **ຄ່າເຊື່ອມມູນຄ່າສະສົມ:** | | | | | | |
| ໃນວັນທີ 1 ມັງກອນ 2015 | 204.793.236 | 33.170.076 | 773.734.488 | 1.165.710 | 117.303.636 | **1.130.167.146** |
| ລາຍຈ່າຍໃນປີ | 336.600.370 | 57.464.304 | 1.467.165.838 | 178.471.834 | 235.717.272 | **2.275.419.618** |
| ລາຍການປັບປຸງ | (33.341.514) | - | (59.854.202) | - | - | **(93.195.716)** |
| **ໃນວັນທີ 31 ທັນວາ 2015** | **508.052.092** | **90.634.380** | **2.181.046.124** | **179.637.544** | **353.020.908** | **3.312.391.048** |
| **ມູນຄ່າຕາມບັຊີ ສຸດທິໃນວັນທີ 31 ທັນວາ 2015** | **6.938.505.528** | **196.686.995** | **5.311.859.410** | **420.481.318** | **825.565.484** | **13.693.098.735** |

## 9. ອາຄານ ແລະ ອຸປະກອນ (ຕໍ່)

ການເຄື່ອນໄຫວກ່ຽວກັບຍອດເຫຼືອຂອງອາຄານ ແລະ ອຸປະກອນ ຂອງທ້າຍປີ ວັນທີ 31 ທັນວາ 2014 ມີດັ່ງນີ້:

| | ອາຄານ ແລະ ການປັບປຸງ ກີບ | ເຄື່ອງໃຊ້ຫ້ອງການ ກີບ | ຄອມພິວເຕີ ກີບ | ເຟີນີເຈີ້ ແລະ ສິ່ງຕິດຕັ້ງ ກີບ | ຍານພາຫະນະ ກີບ | ລວມ ກີບ |
|---|---|---|---|---|---|---|
| ຕົ້ນທຶນ : | | | | | | |
| ໃນວັນທີ 1 ມັງກອນ 2014 | - | - | - | - | - | - |
| ເພີ່ມທຶນ | 8.191.729.416 | 287.321.375 | 7.737.344.314 | 9.991.790 | 1.178.586.392 | **17.404.973.287** |
| **ໃນວັນທີ 31 ທັນວາ 2014** | **8.191.729.416** | **287.321.375** | **7.737.344.314** | **9.991.790** | **1.178.586.392** | **17.404.973.287** |
| **ຄ່າເຊື່ອມມູນຄ່າສະສົມ:** | | | | | | |
| ໃນວັນທີ 1 ມັງກອນ 2014 | - | - | - | - | - | - |
| ລາຍຈ່າຍໃນປີ | 204.793.236 | 33.170.076 | 773.734.488 | 1.165.710 | 117.303.636 | **1.130.167.146** |
| **ໃນວັນທີ 31 ທັນວາ 2014** | **204.793.236** | **33.170.076** | **773.734.488** | **1.165.710** | **117.303.636** | **1.130.167.146** |
| **ມູນຄ່າຕາມບັຊີ ສຸດທິໃນວັນທີ 31 ທັນວາ 2014** | **7.986.936.180** | **254.151.299** | **6.963.609.826** | **8.826.080** | **1.061.282.756** | **16.274.806.141** |

## 10. ຊັບສິນທີ່ບໍ່ມີຕົວຕົນ

ການເຄື່ອນໄຫວກ່ຽວກັບຍອດເຫຼືອຂອງຊັບສິນຄົງທີ່ ບໍ່ມີຕົວຕົນ ມີດັ່ງນີ້:

| | 2015<br>ກີບ | 2014<br>ກີບ |
|---|---|---|
| **ຕົ້ນທຶນ:** | | |
| ໃນວັນທີ 1 ມັງກອນ | 6.413.172.471 | - |
| ເພີ່ມທຶນ | 426.883.281 | 6.413.172.471 |
| **ໃນວັນທີ 31 ທັນວາ** | **6.840.055.752** | **6.413.172.471** |
| **ຄ່າເຊື່ອມມູນຄ່າສະສົມ:** | | |
| ໃນວັນທີ 1 ມັງກອນ | 641.317.242 | - |
| ລາຍຈ່າຍໃນປີ | 1.383.374.049 | 641.317.242 |
| **ໃນວັນທີ 31 ທັນວາ** | **2.024.691.291** | **641.317.242** |
| **ມູນຄ່າຕາມບັນຊີ ສຸດທິໃນວັນທີ 31 ທັນວາ** | **4.815.364.461** | **5.771.855.229** |

## 11. ຊັບສິນອື່ນໆ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ຄ່າໃຊ້ຈ່າຍລ່ວງໜ້າ (i) | 2.599.011.694 | 3.762.543.164 |
| ດອກເບ້ຍຄ້າງຮັບ (ii) | 835.008.332 | 256.587.137 |
| ອື່ນໆ (iii) | 327.809.325 | 120.612.416 |
| | **3.761.829.351** | **4.139.742.717** |

(i) ຄ່າໃຊ້ຈ່າຍລ່ວງໜ້າ ປະກອບມີການຊຳລະເງິນລ່ວງຫນ້າສຳລັບການປະກັນໄພອຸປະກອນເອເລັກໂຕຣນິກ, ເຮືອນ ແລະ ຄ່າເຊົ່າຫ້ອງການ ແລະ ຄ່າເຊົ່າພື້ນທີ່ສຳລັບເຊີເວີຢູ່ທີ່ທະນາຄານແຫ່ງ ສປປ ລາວ.

(ii) ດອກເບ້ຍຄ້າງຮັບປະກອບມີ ດອກເບ້ຍຄ້າງຮັບຈາກເງິນໃຫ້ກູ້ຢືມແກ່ລູກຄ້າ ແລະເງິນຝາກກັບທະນາຄານອື່ນ.

(iii) ການໃຫ້ບໍລິການຂອງທະນາຄານລວມເຖິງ ປຶ້ມແຊັກ, ປຶ້ມເງິນຝາກ ແລະ ການເຊັນຢັ້ງຢືນ

## 12. ເງິນຝາກຈາກລູກຄ້າ

ເງິນຝາກຈາກລູກຄ້າວິເຄາະໄດ້ດັ່ງຕໍ່ໄປນີ້:

### ກ ຕາມປະເພດຂອງເງິນຝາກ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ຝາກກະແສລາຍວັນ | 8.317.964.238 | 3.034.394.519 |
| ຝາກປະຢັດ | 13.692.287.626 | 2.835.582.920 |
| ຝາກມີກໍານົດ | 14.371.649.372 | 2.244.752.101 |
| | **36.381.901.236** | **8.114.729.540** |

### ຂ ຕາມປະເພດຂອງສະກຸນເງິນ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ກີບ | 15.609.420.847 | 2.961.648.004 |
| ໂດລາ | 13.623.799.275 | 4.237.450.354 |
| ບາດ | 7.148.681.114 | 915.631.182 |
| | **36.381.901.236** | **8.114.729.540** |

### ຄ ຕາມໄລຍະເວລາກໍານົດ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ພາຍໃນ 3 ເດືອນ | 23.041.101.512 | 6.244.699.071 |
| 4 ຫາ 6 ເດືອນ | 10.600.359.950 | 164.393.469 |
| 7 ຫາ 12 ເດືອນ | 610.431.499 | 41.227.000 |
| ຫຼາຍກ່ວາ 12 ເດືອນ | 2.130.008.275 | 1.664.410.000 |
| | **36.381.901.236** | **8.114.729.540** |

## 12. ເງິນຝາກຈາກລູກຄ້າ (ຕໍ່)

### ງ ຕາມປະເພດຂອງລູກຄ້າ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ສ່ວນບຸກຄົນ | 17.897.024.170 | 6.129.728.578 |
| ບໍ່ແມ່ນ-ສ່ວນບຸກຄົນ | 18.484.877.066 | 1.985.000.962 |
| | **36.381.901.236** | **8.114.729.540** |

### ຈ ຕາມຄວາມສຳພັນ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ພະນັກງານ | 2.154.716.048 | 459.533.414 |
| ລູກຄ້າ | 34.227.185.188 | 7.655.196.126 |
| | **36.381.901.236** | **8.114.729.540** |

## 13. ນອນເງິນທີ່ຮັບຈາກບໍລິສັດແມ່

| | 2015<br>ກີບ | 2014<br>ກີບ |
|---|---|---|
| ເງິນຝາກປະຈຳ (i) | 12.222.000.000 | - |
| ໜີ້ຕ້ອງສົ່ງລະຫວ່າງບໍລິສັດ (i) | 34.249.620.816 | 37.841.811.854 |
| | **46.471.620.816** | **37.841.811.854** |

(i) ເງິນຝາກມີກຳນົດ, ໃນສະກຸນເງິນ ໂດລາ ສະຫະລັດ, ຕາມອັດຕາດອກເບ້ຍ 1.80% ຕໍ່ປີ(ປີ 2014: 0) ໄລຍະເວລາ 1 ເດືອນ (ປີ 2014: 0).

(ii) ໜີ້ຕ້ອງສົ່ງໃຫ້ລະຫວ່າງທະນາຄານ ປະກອບມີການຊື້ຊັບສິນ ແລະ ອຸປະກອນ ໃນເບື້ອງຕົ້ນໂດຍ ທະນາຄານ ອາ ເຮັສ ບີ – ມາເລເຊຍ ໃນໄລຍະການເລີ່ມສ້າງຕັ້ງທະນາຄານ.

## 14. ໜີ້ສິນອື່ນໆ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ດອກເບ້ຍຄ້າງຈ່າຍ – ເງິນຝາກ | 141.321.105 | 45.466.788 |
| ຍອດຄົງຄ້າງ, ເງິນແຮ ແລະ ໜີ້ສິນອື່ນໆ (i) | 1.180.095.851 | 3.840.141.801 |
| | **1.321.416.956** | **3.885.608.589** |

(i) ດອກເບ້ຍຄ້າງຮັບຄ້າງຈ່າຍທີ່ກ່ຽວຂ້ອງກັບດອກເບ້ຍທີ່ເກີດຂື້ນ ໃນເງິນຝາກຈາກລູກຄ້າ ແລະ ຈາກທະນາຄານອື່ນ.

(ii) ຍອດຄົງຄ້າງ, ເງິນແຮ ແລະ ໜີ້ສິນອື່ນໆ ກ່ຽວກັບຈຳນວນເງິນທີ່ຈະຈ່າຍໃຫ້ລູກຈ້າງເຊັ່ນ: ເງິນໂບນັດ ແລະ ລ່າຍຈ່າຍທີ່ຕ້ອງຈ່າຍໃຫ້ຜູ້ສະໜອງ.

## 15. ທຶນຈົດທະບຽນ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ທຶນຈົດທະບຽນ | **301.500.000.000** | **301.500.000.000** |

ໂດຍອີງຕາມກົດລະບຽບຂອງທະນາຄານ ລົງວັນທີ 17 ພະຈິກ 2014 ທີ່ກ່ຽວກັບຮຸ້ນ ລົງວັນທີ 30 ພຶດສະພາ 2014 ເຊິ່ງທະນາຄານ ອາ ເຮັສ ບີ ຖືຮຸ້ນຢູ່ 100% ຂອງຮຸ້ນທະນາຄານເຖິງ 30,000,000 ຮຸ້ນສາມັນ ເຊິ່ງມີມູນຄ່າຮຸ້ນລະ 10.050 ກີບ (2014 : 10.050 ກີບ) ຮຸ້ນທີ່ອອກໄປທັງໝົດແມ່ນຖືກຊຳລະເຕັມມູນຄ່າ.

## 16. ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນສຸດທິ

| | 2015<br>ກີບ | 2014<br>ກີບ |
|---|---|---|
| **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | | |
| ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນຈາກລູກຄ້າ | 13.462.149.527 | 1.441.562.698 |
| ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນຈາກທະນາຄານ | 226.375.773 | 342.074.629 |
| | **13.688.525.300** | **1.783.637.327** |
| **ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ** | | |
| ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນຈາກລູກຄ້າ | (371.350.023) | (76.393.884) |
| ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນຈາກທະນາຄານ | (11.684.150) | - |
| | **(383.034.173)** | **(76.393.884)** |
| **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນສຸດທິ** | **13.305.491.127** | **1.707.243.443** |

## 17. ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ ສຸດທິ

| | 2015<br>ກີບ | 2014<br>ກີບ |
|---|---|---|
| **ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ** | | |
| ຄ່າທຳນຽມທີ່ກ່ຽວຂ້ອງກັບການດຳເນີນງານກັບລູກຄ້າ | 1.606.604.306 | 937.075.243 |
| | **1.606.604.306** | **937.075.243** |
| **ລາຍຈ່າຍຈາກຄ່າທຳນຽມ ແລະ ຄ່ານາຍໜ້າ** | | |
| ຄ່າທຳນຽມທີ່ກ່ຽວຂ້ອງກັບການດຳເນີນງານກັບລູກຄ້າ | (145.132.981) | (38.764.165) |
| | **(145.132.981)** | **(38.764.165)** |
| **ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ ສຸດທິ** | **1.461.471.325** | **898.311.078** |

## 18. ເງິນເດືອນ ແລະ ຄ່າໃຊ້ຈ່າຍອື່ນໆຂອງພະນັກງານ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ແຮງງານ ແລະ ເງິນເດືອນ | 4.412.602.610 | 2.949.990.928 |
| ຄ່າໃຊ້ຈ່າຍອື່ນໆຂອງພະນັກງານ (i) | 714.033.263 | 1.282.815.983 |
| | **5.126.635.873** | **4.232.806.911** |

(i) ຄ່າໃຊ້ຈ່າຍອື່ນໆຂອງະພະນັກງານຈະລວມມີ ເງິນເດືອນຂອງເດືອນສິບສາມ,ດ້ານປະກັນສັງຄົມ,ດ້ານກິດຈະກຳຕ່າງໆທີເສີມສ້າງ ພັດທະນາການ,ເຄື່ອງແບບ ລວມເຖິງເບ້ຍລ້ຽງ ແລະ ຄ່າໃຊ້ຈ່າຍອື່ນໆ.

## 19. ລາຍຈ່າຍຄ່າບໍລິຫານທົ່ວໄປ

| | 2015 ກີບ | 2014 ກີບ |
|---|---:|---:|
| ຄ່າເຊົ່າ | 1.064.544.000 | 684.318.000 |
| ຄ່າໃຊ້ຈ່າຍໃນການບໍລິຫານອື່ນໆ (ii) | 856.165.312 | 529.000 |
| ຄ່າສ້ອມແປງ ແລະ ບຳລຸງຮັກສາ | 645.142.119 | 14.225.165 |
| ຄ່າປະກັນໄພ | 325.924.951 | 191.165.150 |
| ຄ່າທີ່ປຶກສາ | 282.356.854 | 192.208.160 |
| ຄ່າໃຊ້ຈ່າຍໃນການສື່ສານ | 113.815.502 | 97.382.003 |
| ສິ່ງອຳນວຍຄວາມສະດວກ | 110.496.401 | 93.694.192 |
| ຄ່າທຳນຽມຮັກສາຄວາມປອດໄພ | 108.160.000 | 64.344.668 |
| ລາຍຈ່າຍຄ່າເດີນທາງ ແລະ ຄ່າຂົນສົ່ງ | 96.402.720 | 91.068.545 |
| ລາຍຈ່າຍດ້ານການຕະຫຼາດ ແລະ ກ່ຽວຂ້ອງສາທາລະນະ | 89.555.386 | 162.442.876 |
| ລາຍຈ່າຍສຳລັບຜູ້ຊ່ຽວຊານ | 52.867.820 | 507.966.902 |
| ລາຍຈ່າຍໃນຕອນຕົ້ນ (i) | - | 1.126.155.578 |
| | **3.745.431.065** | **3.225.500.238** |

(i) ຄ່າໃຊ້ຈ່າຍໃນຕອນຕົ້ນປະກອບມີລາຍຈ່າຍທີເກີດຂຶ້ນໃນການຂໍໃບອະນຸຍາດຂອງທາງທະນາຄານ ແລະ ເອກະສານຮັບຮອງອື່ນໆທີ່ຈຳເປັນ.

(ii) ລາຍຈ່າຍຄ່າການບໍລິຫານອື່ນໆ ປະກອບມີ ຄ່າທຳນຽມການຝາກເງິນກອງທຶນໃນການຄຸ້ມຄອງ, ຄ່າທຳນຽມໃນການດຳເນີນງານຂອງທະນາຄານແຫ່ງ ສປປ ລາວ, ແລະ ຄ່າໃຊ້ຈ່າຍເບັດເສັດອື່ນ.

## 20. ລາຍຈ່າຍອາກອນກໍາໄລ

ອີງຕາມກົດໝາຍສ່ວຍສາອາກອນສະບັບປັບປຸງ ເລກທີ 05 ລົງວັນທີ 20 ທັນວາ 2011 ອອກໂດຍປະທານສະພາແຫ່ງຊາດ ວ່າດ້ວຍອາກອນກໍາໄລ ທີ່ມີຜົນບັງຄັບໃຊ້ ສໍາລັບຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດທີ່ດໍາເນີນທຸລະກິດ ມີອັດຕາ 24% (2014: 24%) ຂອງລາຍໄດ້ທັງໝົດທີ່ຕ້ອງເສຍອາກອນ.

| | 2015<br>ກີບ | 2014<br>ກີບ |
|---|---|---|
| ກໍາໄລ/(ຂາດທຶນ) ກ່ອນອາກອນໃນປີ | 3.597.005.626 | (7.272.643.474) |
| ລາຍຈ່າຍທີ່ບໍ່ສາມາດຫັກ | - | - |
| ລາຍຮັບທີ່ບໍ່ຖືກອາກອນ | (4.060.788.983) | - |
| ຍົກຍອດຂາດທຶນປີຜ່ານມາ (i) | (7.272.643.474) | - |
| ກໍາໄລ/(ຂາດທຶນ) ກ່ອນອາກອນຂອງປີ ຫຼັງຈາກ ຍົກຍອດຂາດທຶນ | **(7.736.426.831)** | **(7.272.643.474))** |
| **ລາຍຈ່າຍອາກອນກໍາໄລ ໃນອັດຕາທີ່ນໍາໃຊ້ (2015: 24%, 2014: 24%)** | **-** | **-** |

ການຂາດທຶນອາກອນເກີດຂຶ້ນໃນປີສາມາດຍົກຍອດໄປຫັກຕໍ່ກັບ ກໍາໄລ ໄດ້ຮັບຮູ້ໃນສາມປີຕໍ່ໄປ ຕາມເງື່ອນດັ່ງຕໍ່ໄປນີ້:

- ການຂາດທຶນ ຕ້ອງໄດ້ຮັບການບັນທຶກໄວ້ໃນ ໃບແຈ້ງເສຍອາກອນກໍາໄລ ແລະ ນໍາສົ່ງໄປຍັງກົມສ່ວຍສາອາກອນ ຕາມເວລາທີ່ກໍານົດ.
- ວັດຖຸປະສົງທຸລະກິດຂອງທະນາຄານບໍ່ສາມາດປ່ຽນແປງ.
- ຄວາມເປັນເຈົ້າຂອງຂອງທະນາຄານບໍ່ສາມາດປ່ຽນແປງ.

## 21. ລາຍການຂອງພາກສ່ວນທີ່ກ່ຽວຂ້ອງ

ທະນາຄານຖືຮຸ້ນ 100% ເປັນເຈົ້າຂອງໂດຍ ທະນາຄານ ອາ ເຮັສ ບີ Berhad, ຊຶ່ງເປັນຝ່າຍທີ່ຄວບຄຸມທີ່ດີທີ່ສຸດ.

ມີຈໍານວນລາຍການເຄື່ອນໄຫວທະນາຄານບໍ່ຫຼາຍປານໃດທີ່ເຂົ້າໃນພາກສ່ວນທີ່ກ່ຽວຂ້ອງໃນກິດຈະການປົກກະຕິ, ເຊິ່ງສ່ວນໃຫຍ່ເປັນເງິນຝາກ ບໍ່ມີບັນຫາເງິນໃຫ້ກູ້ຢືມກັບພາກສ່ວນທີ່ກ່ຽວຂ້ອງ.

ເງິນຝາກກັບການບໍລິຫານທີ່ສໍາຄັນແມ່ນປະກອບດ້ວຍ ເງິນຝາກປະຢັດ ແລະ ເງິນຝາກມີກໍານົດ, ທັງຫມົດນີ້ບໍ່ມີຫຼັກປະກັນ. ເງິນຝາກປະຫຍັດ ແມ່ນຕ້ອງຊໍາລະຄືນເມື່ອທວງຖາມ ແລະ ມີອັດຕາດອກເບ້ຍຈາກ 1,85% ຫາ 2,25% ຕໍ່ປີ (2014: 1,85% ກັບ 2,25%), ໂດຍອີງຕາມສະກຸນເງິນ. ເງິນຝາກມີກໍານົດ ມີອັດຕາດອກເບ້ຍຈາກ 2,50% ຫາ 6,35% ຕໍ່ປີ (2014: 2,50% ກັບ 6,35% ໂດຍອີງຕາມກໍານົດເວລາ ແລະ ສະກຸນເງິນ. ເງິນຝາກມີກໍານົດ ຕໍ່ການບໍລິຫານທີ່ສໍາຄັນມີຂໍ້ກໍານົດນັບຕັ້ງແຕ່ 1 ເດືອນ ເຖິງ 12 ເດືອນ.

ປະລິມານການເຄື່ອນໄຫວຈາກພາກສ່ວນທີ່ກ່ຽວຂ້ອງ ຍອດຄົງຄ້າງ, ໃນທ້າຍປີ, ແລະຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ ແລະ ລາຍຮັບສໍາລັບປີແມ່ນດັ່ງຕໍ່ໄປນີ້:

| | 2015<br>ກີບ | 2014<br>ກີບ |
|---|---|---|
| ***ທະນາຄານ ອາ ເຮັສ ບີ – ມາເລເຊຍ (ທະນາຄານຜູ້ຖືຮຸ້ນ)*** | | |
| ***ກ. ຝາກມີກໍານົດ*** | | |
| ວັນທີ 1 ມັງກອນ | 403.300.000 | - |
| ເງິນຝາກທີ່ຖອນອອກໃນລະຫວ່າງປີ | (50.634.211) | - |
| ກໍາໄລ-ຂາດທຶນຈາກການຊື້ຂາຍເງິນຕາຕ່າງປະເທດ | (3.514.131) | - |
| **ໃນວັນທີ 31 ທັນວາ (ບົດອະທິບາຍຂໍ້ທີ 5)** | **349.184.658** | **403.300.000** |

## 21. ລາຍການຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

| | 2015<br>ກີບ | 2014<br>ກີບ |
|---|---|---|
| ***ຂ. ຝາກມີກໍານົດ*** | | |
| ວັນທີ 1 ມັງກອນ | - | - |
| ເງິນຝາກໄດ້ຮັບໃນລະຫວ່າງປີ | 12.222.000.000 | - |
| ໃນວັນທີ 31 ທັນວາ (ບົດອະທິບາຍຂໍ້ທີ 13) | **12.222.000.000** | **-** |
| ລາຍຈ່າຍດອກເບ້ຍ | 11.684.150 | - |

| | 2015<br>ກີບ | 2014<br>ກີບ |
|---|---|---|
| ***ທະນາຄານ ອາ ເຮັສ ບີ – ມາເລເຊຍ (ທະນາຄານຜູ້ຖືຮຸ້ນ)*** | | |
| ***ຄ. ໜີ້ຕ້ອງສົ່ງລະຫວ່າງບໍລິສັດ*** | | |
| ວັນທີ 1 ມັງກອນ | 37.841.811.854 | - |
| ໜີ້ຕ້ອງສົ່ງເພີ່ມຂຶ້ນໃນລະຫວ່າງປີ | 1.293.585.396 | 37.841.811.854 |
| ລາຍຈ່າຍໃນລະຫວ່າງປີ | (2.036.830.196) | - |
| ກໍາໄລ ຈາກການຊື້ຂາຍເງິນຕາຕ່າງປະເທດ | (2.848.946.238) | - |
| **ໃນວັນທີ 31 ທັນວາ (ບົດອະທິບາຍຂໍ້ທີ 13)** | **34.249.620.816** | **37.841.811.854** |
| ຄ່າບໍາລຸງຮັກສາລະບົບໂອນເງິນ Swift | 108.149.056 | 28.162.278 |

| | 2015<br>ກີບ | 2014<br>ກີບ |
|---|---|---|
| ***ທະນາຄານ ອາ ເຮັສ ບີ - ໄທ*** | | |
| ***ຝາກມີກໍານົດ*** | | |
| ວັນທີ 1 ມັງກອນ | 123.250.000 | - |
| ເງິນຝາກໂອນລະຫວ່າງປີ | 44.112.941 | 123.250.000 |
| ກໍາໄລ-ຂາດທຶນຈາກການຊື້ຂາຍເງິນຕາຕ່າງປະເທດ | 1.252.975 | - |
| **ໃນວັນທີ 31 ທັນວາ (ບົດອະທິບາຍຂໍ້ທີ** 5) | **168.615.916** | **123.250.000** |

## 21. ລາຍການຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

| | 2015<br>ກີບ | 2014<br>ກີບ |
|---|---|---|
| ***ຜູ້ອຳນວຍການ ແລະ ການບໍລິຫານທີ່ສຳຄັນ*** | | |
| ***ເງິນຝາກຈາກລູກຄ້າ*** | | |
| ວັນທີ 1 ມັງກອນ | 278.762.939 | - |
| ເງິນຝາກທີ່ໄດ້ຮັບລະຫວ່າງປີ | 680.416.464 | 278.762.939 |
| ກຳໄລ-ຂາດທຶນຈາກການຊື້ຂາຍເງິນຕາຕ່າງປະເທດ | (2.923.940) | - |
| **ໃນວັນທີ 31 ທັນວາ** | **956.255.463** | **278.762.939** |
| ລາຍຈ່າຍດອກເບ້ຍ | 21.515.748 | 4.181.444 |
| ເງິນເດືອນ ແລະ ຜົນປະໂຫຍດອື່ນໆໄລຍະສັ້ນຂອງພະນັກງານ | 5.006.408.141 | 2.949.990.928 |
| ຜົນປະໂຫຍດອື່ນໆໄລຍະຍາວ | - | 1.282.815.983 |

## 22. ພາລະຜູກພັນ ແລະ ໜີ້ສິນ

ໃນວັນທີ 31 ທັນວາ 2015, ທາງທະນາຄານມີຈຳນວນສັນຍາ ນອກໃບສະຫລຸບຊັບສິນບັດ, ເຄື່ອງມືທາງການເງິນທີ່ມີຂໍ້ຜູກມັດ ທີ່ຈະຂະຫຍາຍການປ່ອຍສິນເຊື່ອໃຫ້ລູກຄ້າ. ຈຳນວນເງິນເບີກເກີນບັນຊີທີ່ຍັງບໍ່ຖືກນຳໃຊ້ແມ່ນມີວົງເງິນສິນເຊື່ອໃຫ້ແກ່ລູກຄ້າ ແຕ່ຍັງບໍ່ມີການຖອນ ໃນວັນທີ 31 ທັນວາ 2015.

*(ກ) ວົງເງິນສິນເຊື່ອ*

| | 2015<br>ກີບ | 2014<br>ກີບ |
|---|---|---|
| ຈຳນວນເງິນເບີກເກີນບັນຊີທີ່ຍັງບໍ່ຖືກນຳໃຊ້ | 28.834.832.792 | 7.637.664.991 |

**ພາລະຜູກພັນ ແລະ ໜີ້ສິນ**

***(ຂ)*** ພາລະຜູກພັນທາງອາກອນ

ລະບົບອາກອນໃນ ສປປ ລາວ ເປັນສິ່ງທີ່ຄ່ອນຂາງໃໝ່ ແລະ ມີອາກອນກ່ຽວຂ້ອງເປັນຈຳນວນຫຼາຍ ແລະ ມັກຈະມີການປ່ຽນແປງທາງກົດໝາຍ ແລະ ບໍ່ທັນຈະແຈ້ງເທື່ອ ເຊິ່ງມີຜົນຕໍ່ການແປຄວາມ ຫຼາຍເທື່ອທີ່ການຕີຄວາມໝາຍແຕກຕ່າງກັນລະຫວ່າງໜ່ວຍງານຈັດເກັບອາກອນມີການທົບທວນ ແລະ ກວດສອບໄລ່ລຽງຈາກໜ່ວຍງານທີ່ກ່ຽວຂ້ອງກັບອາກອນ ຕາມກົດໝາຍ ເຊິ່ງສາມາດກຳນົດຄ່າປັບໃໝ. ຂໍ້ເທັດຈິງເຫຼົ່ານີ້ອາດຈະສ້າງຄວາມສ່ຽງຕໍ່ອາກອນໃນ ສປປ ລາວ ຢ່າງເປັນສາລະສຳຄັນຫຼາຍກ່ວາໃນບັນດາປະເທດອື່ນໆ. ຜູ້ບໍລິຫານເຊື່ອໝັ້ນວ່າໄດ້ສະຫນອງ ໜີ້ສິນອາກອນຢ່າງພຽງພໍ ອີງຕາມການຕີຄວາມຂໍ້ກົດໝາຍສ່ວຍສາອາກອນ. ຢ່າງໃດກໍຕາມ, ເຈົ້າໜ້າທີ່ສ່ວຍສາອາກອນທີ່ກ່ຽວຂ້ອງ ອາດຕີຄວາມຂໍ້ກົດໝາຍທີ່ແຕກຕ່າງ ແລະ ອາດມີຜົນກະທົບທີ່ເປັນສາລະສຳຄັນ.

## 23. ເຫດການຫຼັງຈາກມື້ລາຍງານຖານະການເງິນ

ບໍ່ມີເຫດການທີ່ເປັນສາລະສຳຄັນເກີດຂຶ້ນຫຼັງຈາກມື້ລາຍງານຖານະການເງິນ ທີ່ຈະມີຜົນກະທົບຕໍ່ຕົວເລກໃນຂໍ້ມູນ ແລະ ເອກະສານລາຍງານການເງິນ.